# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມັງກອນ 2026

ປີທີ 15

ສະບັບທີ 1048

ລາຍສັປະດາ


## ສູນທອນພິດສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ກ່າວໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ



ຮຽນ: - ຄະນະປະທານກອງປະຊຸມໃຫຍ່ ທີ່ນັບຖື,

-ບັນດາສະຫາຍຜູ້ແທນ, ແຂກຜູ້ມີກຽດ ທີ່ຮັກແພງ.

ຂ້າພະເຈົ້າ, ຮູ້ສຶກເປັນກຽດຢ່າງຍິ່ງທີ່ມີໂອກາດໄດ້ຂຶ້ນມາກ່າວໄຂກອງປະຊຸມໃຫຍ່ຜູ້

ອ່ານຕໍ່ໜ້າ 4



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນເມື່ອມີບັນຫາໃດໜຶ່ງທີ່ມີຄວາມເຫັນແຕກຕ່າງກັນນັ້ນ ພວກເຮົາຕ້ອງຈັດຕັ້ງການຄົ້ນຄວ້າອະພິປາຍຢ່າງມີປະຊາທິປະໄຕ ເພື່ອໄປເຖິງບ່ອນຊອກເຫັນສັດຈະທຳ. ຜູ້ນຳພາ ຈະແມ່ນຢູ່ໃນຂັ້ນໃດກໍດີ ຕ້ອງເຝິກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນລັກສະນະທຸ່ນທ່ຽງໃນການຟັງຄວາມຄິດເຫັນຂອງຜູ້ອື່ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 184)

ໝູ່ຄະນະເຂັ້ມແຂງ ແລະ ມີຫົວຄິດປະດິດສ້າງ ຈຶ່ງຈະສ້າງເງື່ອນໄຂອຳນວຍໃຫ້ແກ່ການເສີມຂະຫຍາຍຄວາມສາມາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຄົນ. ດ້ານໜຶ່ງອີກ, ໃນເມື່ອແຕ່ລະຄົນ ມີສະຕິການເມືອງສູງ ແລະ ມີຄວາມຂະຫຍັນຂັນແຂງແລ້ວ ມັນກໍຈະເປັນການປະກອບສ່ວນເຂົ້າໃນການເພີ່ມທະວີຄວາມສາມາດແຫ່ງການນຳພາຂອງໝູ່ຄະນະນັ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 185-186)

ອ່ານຕໍ່ສະບັບໜ້າ

## ຮ່າງໂຄງການການເມືອງ ສະບັບທີ 3 ຂອງພັກປະຊາຊົນປະຕິວັດລາວ




I. ໂຄງການການເມືອງສະບັບທີ III ວ່າດ້ວຍການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

1. ຂະບວນວິວັດການປະຕິບັດໂຄງການການເມືອງຂອງພັກ ນັບແຕ່ພັກປະຊາຊົນປະຕິວັດລາວໄດ້ຮັບການສ້າງຕັ້ງຂຶ້ນ, ພັກເຮົາ ໄດ້ວາງໂຄງການການເມືອງ ອອກ 2 ຄັ້ງຄື: ຄັ້ງທີ I ແມ່ນເປັນໂຄງການການເມືອງສະບັບທຳອິດ ທີ່ປະກາດອອກໃນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ໃນວັນທີ 22 ມີນາ 1955 ເຊິ່ງເປັນໂຄງການການເມືອງທີ່ກຳນົດທິດນຳຂອງພັກ ແລະ ຖືເປັນແນວທາງກຳນົດໃຫ້ພັກເຮົາພາຍຫຼັງສ້າງຕັ້ງຂຶ້ນ ໄດ້ດຳເນີນພາລະກິດຕໍ່ສູ້ຕ້ານການຮຸກຮານຈາກຈັກກະພັດລ່າເມືອງຂຶ້ນ ແລະ ລູກມືຂອງພວກເຂົາ; ໂຄງການການເມືອງສະບັບນີ້ໄດ້ກາຍເປັນແສງ

ອ່ານຕໍ່ໜ້າ 5




## ຄະນະບໍລິຫານງານສູນກາງພັກ ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 13




(ສພຊ) - ວັນທີ 5 ມັງກອນນີ້, ຄະນະບໍລິຫານງານສູນກາງພັກ ໄດ້ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 13 ສະໄໝທີ XI ໂດຍການເປັນປະທານຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ

ອ່ານຕໍ່ໜ້າ 8

## ກອງປະຊຸມສະໄໝວິສາມັນຂອງຄະນະປະຈຳສະພາແຫ່ງຊາດ



(ສພຊ) - ກອງປະຊຸມສະໄໝວິສາມັນຂອງຄະນະປະຈຳສະພາແຫ່ງຊາດ ເດືອນມັງກອນ 2026 ໄດ້ດຳເນີນໃນວັນທີ5 ມັງກອນຜ່ານມາໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການ

ອ່ານຕໍ່ໜ້າ 2

## ວາງພວງມາລາ ແລະ ກະຕ່າດອກໄມ້ ຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຂອງພັກ



ອ່ານຕໍ່ໜ້າ 2

## ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ຈະໄຂຂຶ້ນໃນວັນອັງຄານນີ້




ອ່ານຕໍ່ໜ້າ 8




ປະໂຫຍດຈາກນ້ຳເຜິ້ງ (ໜ້າ 9)



ປິດກອງປະຊຸມ... (ໜ້າ 10)

ຕາມໂລກໃຫ້ທັນ... (ໜ້າ 12)





## ຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ

# ຄວາມສຳຄັນຂອງກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ




ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແມ່ນເປັນເຫດການທາງປະຫວັດສາດສຳຄັນຂອງພັກ ແລະ ຂອງຊາດ, ມີຄວາມໝາຍສຳຄັນພິເສດ; ກອງປະຊຸມໃຫຍ່ ເປັນອົງການນຳພາສູງສຸດຂອງພັກ, ຕັດສິນບັນຫາຍຸດທະສາດ, ພື້ນຖານແລະຍາວນານ ຂອງການປະຕິວັດແຫ່ງການພັດທະນາປະເທດຊາດໃນແຕ່ລະໄລຍະ. ກອງປະຊຸມຈະໄດ້ເລືອກເອົາຄະນະບໍລິຫານງານສູນກາງພັກຊຸດໃໝ່ເພື່ອມາປະຕິບັດເຈດຈຳນົງ, ຄວາມມຸ່ງຫວັງ, ເປັນກຳລັງແຮງຄວາມສາມັກຄີຂອງທົ່ວພັກ, ທົ່ວປວງຊົນ; ກອງປະຊຸມໃຫຍ່ ມີຄວາມໝາຍທາງການເມືອງ-ສັງຄົມທີ່ເລິກເຊິ່ງ ສ້າງຄວາມເຊື່ອໝັ້ນຕໍ່ປະຊາຊົນ ແລະ ເຊີດຊູບົດບາດການນຳພາຂອງພັກ, ສະທ້ອນໃຫ້ເຫັນເຖິງການພັດທະນາປະເທດຊາດໃນຊຸມປີຕໍ່ໜ້າ. ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ຄັ້ງນີ້, ດຳເນີນພາຍໃຕ້ຄຳຂວັນ "ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ໝັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ"; ກອງປະຊຸມໃນຄັ້ງນີ້, ຈະໄດ້ຄົ້ນຄວ້າພິຈາລະນາແລະຮັບຮອງເອົາເອກະສານສຳຄັນ ຄື: ຮ່າງໂຄງການການເມືອງສະບັບທີ 3 ຂອງພັກ, ຮ່າງລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XII ແລະ ເອກະສານສຳຄັນອື່ນໆ. ບັນດາເອກະສານສຳຄັນດັ່ງກ່າວ ແມ່ນເປັນການກຳນົດແນວທາງການເມືອງແລະແນວທາງການຈັດຕັ້ງປະຕິບັດຂອງພັກໃນຊຸມປີຕໍ່ໜ້າ ຢ່າງມີວິທະຍາສາດ ແລະ ແທດກັບສະພາບຄວາມເປັນຈິງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປັດຈຸບັນ ແລະ ອະນາຄົດ; ກອງປະຊຸມຍັງຈະໄດ້ດຳເນີນການເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ ສະໄໝທີ XII ທີ່ເປັນອົງການນຳພາສູງສຸດຂອງພັກ ເພື່ອແບກຫາບພາລະໜ້າທີ່ອັນໜັກໜ່ວງ ທີ່ພັກກໍຄືປະຊາຊົນ ໄດ້ມອບໝາຍໃຫ້ໃນ 5 ປີຕໍ່ໜ້າ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກໃນຄັ້ງນີ້ ປະຕິບັດຕາມວາລະ, ແຕ່ພິເສດຄັ້ງນີ້ ກອງປະຊຸມຈະໄດ້ຮັບຮອງເອົາໂຄງການການເມືອງສະບັບທີ 3 ຂອງພັກ ພາຍຫຼັງ 50 ກວ່າປີທີ່ພັກບໍ່ໄດ້ມີໂຄງການການເມືອງ, ແຕ່ນຳພາດ້ວຍການວາງແນວທາງໃນແຕ່ລະສະໄໝກອງປະຊຸມ. ໃນໂຄງການການເມືອງເທື່ອນີ້ ໄດ້ກຳນົດແຈ້ງທິດທາງ, ຈຸດໝາຍ ແລະ 11 ນະໂຍບາຍໃຫຍ່; ພິເສດ ໄດ້ກຳນົດແຈ້ງໄລຍະການພັດທະນາປະເທດຊາດ ຮອດປີ 2055 ເມື່ອວັນສ້າງຕັ້ງພັກຄົບຮອບ 100 ປີ ແມ່ນສູ້ຊົນສ້າງປະເທດເຮົາ ເປັນປະເທດພັດທະນາ ມີລາຍຮັບປານກາງສູງ ຫຍັບເຂົ້າໃກ້ປະເທດມີລາຍຮັບສູງ. ຄວາມຄາດຫວັງກອງປະຊຸມໃຫຍ່ຄັ້ງນີ້, ແມ່ນສະແດງອອກກວມລວມຫຼາຍດ້ານ: ດ້ານການເມືອງ: ແມ່ນເຮັດໃຫ້ມະຕິຂອງພັກ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດເປັນຮູບປະທຳ, ເຮັດໃຫ້ບົດບາດການນຳພາມີຄວາມເຂັ້ມແຂງ, ການຄຸ້ມຄອງບໍລິຫານລັດມີຄວາມສັກສິດ, ປະຊາຊົນພົນລະເມືອງ ໄດ້ຮັບການຍົກສູງລະດັບຊີວິດການເປັນຢູ່ດີຂຶ້ນເປັນກ້າວໆ. ດ້ານເສດຖະກິດ: ແມ່ນຍົກສູງຈິດໃຈຄວາມມຸ່ງໝັ້ນພັດທະນາຢ່າງແຮງກ້າ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ. ໃນແຜນພັດທະນາ ຈຶ່ງໄດ້ວາງ 6 ເປົ້າໝາຍສຳຄັນ; ໃນນີ້, ເປົ້າໝາຍທີໜຶ່ງ ແມ່ນສຸມໃສ່ພັດທະນາເສດຖະກິດ ເຮັດໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ມີຄຸນນະພາບ, ດ້ວຍການຊຸກຍູ້ການເຕີບໂຕເສດຖະກິດ ທີ່ມີຄຸນນະພາບ ແລະ ຍືນຍົງ; ສ້າງເສດຖະກິດມະຫາພາກ ມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ; ຍົກສູງປະສິດທິພາບການລົງທຶນ; ການພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍແລະຂະໜາດກາງ ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ, ພັດທະນາວິສາຫະກິດຂອງລັດ, ເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິຜົນສູງ. ນອກຈາກນັ້ນ, ໄດ້ສຸມໃສ່ວຽກງານສຳຄັນຈຳນວນໜຶ່ງ ຄື: ການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບສູງ, ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ; ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດ ໄດ້ຮັບການພັດທະນາຢ່າງສົມຄູ່ ແລະ ຄວາມທຸກຂອງປະຊາຊົນ ໃຫ້ຫຼຸດລົງເທື່ອລະກ້າວ; ປົກປັກຮັກສາຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດຕ່າງໆ; ເຊື່ອມໂຍງເຊື່ອມຈອດກັບພາກພື້ນ ແລະ ສາກົນ ຢ່າງກວ້າງຂວາງ ແລະ ມີປະສິດທິຜົນ; ຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ. ຄວາມມຸ່ງຫວັງທັງໝົດນີ້, ສະແດງອອກເຖິງມານະຈິດປະຕິວັດ, ຄວາມຫວັງ, ຄວາມຄອງຄອຍຂອງທົ່ວພັກໃນການພັດທະນາປະເທດຊາດ ໃຫ້ເປັນຮູບປະທຳ, ສ້າງພື້ນຖານອັນໜັກແໜ້ນໃຫ້ການສ້າງປະຖົມປັດໄຈ ກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາ.

ຄັດຈາກ: ການໃຫ້ສຳພາດຕໍ່ສື່ມວນຊົນຂອງສະຫາຍຄຳພັນ ເຜີຍຍະວົງ ຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ຕາງໜ້າກອງເລຂາກອງປະຊຸມກ່ຽວກັບຄວາມໝາຍຄວາມສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ (ຄັ້ງວັນທີ02ມັງກອນ2026).



## ວາງພວງມາລາ...

(ຕໍ່ຈາກໜ້າ 1)

(ສພຊ)-ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແລະ ຄະນະຜູ້ແທນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ເຊິ່ງຕາງໜ້າຄະນະຜູ້ແທນທີ່ມາຈາກສູນກາງ ແລະ ທ້ອງຖິ່ນ ນຳໂດຍສະຫາຍ ພົທ. ແສງນວນ ໄຊຍະລາດ ເລຂາຄະນະບໍລິຫານງານພັກ, ປະທານສະຫະພັນນັກຮົບເກົ່າລາວ ໄດ້ເຂົ້າວາງພວງມາລາຢູ່ອະນຸສາວະລີນັກຮົບນິລະນາມ ທີ່ໜ້າຫໍສະພາແຫ່ງຊາດ ແລະ ວາງກະຕ່າດອກໄມ້ ຢູ່ໜ້າຮູບປັ້ນຫຼໍ່ຂອງປະທານ ໄກສອນ ພົມວິຫານ ທີ່ຫໍພິພິທະພັນ ໄກສອນ ພົມວິຫານ ໃນຕອນເຊົ້າວັນທີ 5 ມັງກອນນີ້ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວທີ່ຈະເປີດຂຶ້ນໃນລະຫວ່າງວັນທີ 6-8 ມັງກອນ 2026.

ການວາງພວງມາລາ ແລະ ກະຕ່າດອກໄມ້ ໃນຄັ້ງນີ້, ເປັນການສະແດງເຖິງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນເຖິງຄຸນງາມຄວາມດີ, ນ້ຳໃຈຕໍ່ສູ້ຢ່າງພິລະອາດຫານ ແລະ ບໍ່ຍອມຈຳນົນຂອງບັນພະບຸລຸດລາວກໍຄືບັນດານັກຮົບປະຕິວັດຂອງລາວ ທີ່ເສຍສະຫຼະຊີວິດ, ເລືອດເນື້ອ ເພື່ອພາລະກິດປະຕິວັດ ຢ່າງອົງອາດກ້າຫານ ພາຍໃຕ້ການນຳພາ-ຊີ້ນຳຂອງພັກປະຊາຊົນປະຕິວັດລາວ ຈົນສາມາດຍາດໄດ້ໄຊຊະນະຢ່າງສົມບູນ ແລະ ປະກາດເອກະລາດ, ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975. ພ້ອມນີ້, ຍັງເປັນການສະແດງເຖິງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນຕໍ່ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກຂອງພັກ-ລັດ ແລະ ປວງຊົນລາວທັງຊາດ, ເພິ່ນໄດ້ສຸມສະຕິປັນຍາເຂົ້າໃນການນຳພາ-ຊີ້ນຳພາລະກິດປະຕິວັດ ຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດຕ່າງດ້າວ, ສາມາດຍາດໄດ້ໄຊຊະນະ ແລະ ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ; ປະທານ ໄກສອນ ພົມວິຫານ ຍັງເປັນຜູ້ນຳທີ່ມີແນວຄິດລິເລີ່ມ ແລະ ຊອກຫາແນວທາງການປ່ຽນແປງໃໝ່ຂອງການປະຕິວັດໃນໄລຍະໃໝ່ ພ້ອມທັງເປັນຜູ້ລິເລີ່ມນຳພາຈັດຕັ້ງປະຕິບັດ ອັນໄດ້ກາຍເປັນພື້ນຖານໃນການດຳເນີນວຽກງານ ໃນການປະຕິບັດ 2 ໜ້າທີ່ຍຸດທະສາດຂອງພັກ-ລັດເຮົາໃນປັດຈຸບັນ ແລະ ນັບມື້ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ມີຄຸນນະພາບຊີວິດດີຂຶ້ນເທື່ອລະກ້າວ, ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ປະຊາຊົນລາວບັນດາເຜົ່າ; ປະທານ ໄກສອນ ພົມວິຫານ ໄດ້ກາຍເປັນຕົວແທນລວມຍອດແຫ່ງຄວາມຮັກຊາດ ແລະ ເປັນສັນຍະລັກແຫ່ງຊາດລາວວິລະຊົນ, ຄົນລາວພິລະອາດຫານ ເຊິ່ງຜົນງານ ແລະ ຄຸນງາມຄວາມດີຂອງເພິ່ນ ໄດ້ຈາລຶກໃນຄວາມຊົງຈຳຂອງປະຊາຊົນລາວບັນດາເຜົ່າ ຕະຫຼອດໄປ.

**(ເພຈເຟສບຸກໜສພ.ປະຊາຊົນ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາໜັງສືສະເໜີຂອງລັດຖະບານກ່ຽວກັບການດັດແກ້ມູນຄ່າໂຄງການກໍ່ສ້າງເສັ້ນທາງຍົກລະດັບທາງປູຫີນ ເສັ້ນທາງເລກທີ 3127 ແຕ່ບ້ານໄຮ່-ບ້ານນ້ຳຮ່າງ ເມືອງຈອມເພັດ ແຂວງຫຼວງພະບາງ ເຊິ່ງບັນດາຜູ້ເຂົ້າຮ່ວມ ໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນ ຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ຫົວຂໍ້ເນື້ອໃນ ທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍແລະມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະປະດິດ)**

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)


ການເຄື່ອນໄຫວວຽກງານການຕ່າງປະເທດ

**ການເຄື່ອນໄຫວວຽກງານການຕ່າງປະເທດ:**

ປີ 2023 ສະພາແຫ່ງຊາດ ເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດ ຈຳນວນ 8 ຄັ້ງ ເປັນຕົ້ນ ສປຈີນ, ມົງໂກລີ, ອິນໂດເນເຊຍ...; ຄະນະຜູ້ແທນຂອງສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ໃນພາກພື້ນ ແລະ ສາກົນ ທັງໝົດຈຳນວນ 15 ຄັ້ງ ເຊັ່ນ: ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 44 ຢູ່ລາຊະອານາຈັກກຳປູເຈຍ, ກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 147, ກອງປະຊຸມໃຫຍ່ສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF) ຄັ້ງທີ 48 ແລະ ກອງປະຊຸມປິ່ນອ້ອມອື່ນໆ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ລວມທັງຄະນະມິດຕະພາບລັດຖະສະພາຈຳນວນໜຶ່ງທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຈຳນວນ 9 ຄະນະ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ເຂົ້າອວຍພອນ ຂອງບັນດາຄະນະຜູ້ແທນພາຍໃນ ແລະ ຕ່າງປະເທດ ລວມທັງທູຕານຸທູດ, ອົງການຈັດຕັ້ງສາກົນ ປະຈຳຢູ່ ສປປລາວ ຈຳນວນ 19 ຄະນະ ແລະ ຈັດກອງປະຊຸມພົບປະເຮັດວຽກສອງຝ່າຍກັບບັນດາລັດຖະສະພາປະເທດເພື່ອນມິດ 4 ຄະນະ. ນອກນັ້ນ, ຍັງໄດ້ກະກຽມ ແລະ ເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາສາມປະເທດກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໃນທ້າຍປີ 2023 ແລະ ເລີ່ມກະກຽມດ້ານຕ່າງໆໃຫ້ແກ່ການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຢູ່ ສປປລາວ.

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2024 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນດາກົດໝາຍ ຈຳນວນທັງໝົດ 18 ສະບັບ, ໃນນີ້:

- ກົດໝາຍສ້າງໃໝ່ 4 ສະບັບ ຄື: 1. ກົດໝາຍວ່າດ້ວຍສະຫະກອນ, 2. ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ, 3. ກົດໝາຍວ່າດ້ວຍທີ່ຢູ່ອາໄສ, 4. ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ;
- ກົດໝາຍປັບປຸງ 14 ສະບັບ ຄື: 1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 2. ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 3. ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 4. ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5. ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 6. ກົດໝາຍວ່າດ້ວຍການທ່ອງທ່ຽວ, 7. ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອດຈ໌ໄອວີ/ພະຍາດເອດ, 8. ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, 9. ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ, 10. ກົດໝາຍວ່າ ດ້ວຍການສຶກສາ, 11. ກົດໝາຍວ່າດ້ວຍການກວດສອບອິດສະຫຼະ, 12. ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, 13. ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, 14. ກົດໝາຍວ່າດ້ວຍການປັບປຸງມາດຕາຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

ສະພາແຫ່ງຊາດ ໄດ້ດຳເນີນການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2015 ໃນຂອບເຂດທົ່ວປະເທດ ເຊິ່ງຜູ້ເຂົ້າຮ່ວມທັງໝົດ 13,039 ຄົນ, ຍິງ 2,290 ຄົນ; ຄົ້ນຄວ້າຕີຄວາມໝາຍຂອງກົດໝາຍ ຈຳນວນ 2 ຫົວຂໍ້ ຄື: ປະມວນກົດໝາຍແພ່ງ ກ່ຽວກັບການຈັດທະບຽນການແຕ່ງດອງ; ປະມວນກົດໝາຍອາຍາ ກ່ຽວກັບການຄິດໄລ່ດອກເບ້ຍສູງ; ພິຈາລະນາໃຫ້ສັດຕະຍາບັນແກ່ການຮັບຮູ້ເຊິ່ງກັນແລະກັນດ້ານມາດຕະຖານຜະລິດຕະພັນຍານພາຫະນະອາຊຽນ, ລົງນາມບົດບັນທຶກການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບສະພາແຫ່ງຊາດເບລາຣຸດຊີ, ກູບາແລະມົງໂກລີ.

ນອກນັ້ນ, ໄດ້ດຳເນີນການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານແລະກົດໝາຍວ່າດ້ວຍປ້າຍ; ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດຄວາມຮັບຜິດຊອບຂອງສະພາແຫ່ງຊາດ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ບັນດາກະຊວງ-ອົງການ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຈຳນວນ 7 ຄັ້ງ ເຊິ່ງມີຜູ້ເຂົ້າຮ່ວມ 289 ຄົນ, ຍິງ 97 ຄົນ ແລະ ເຂດເລືອກຕັ້ງທົ່ວປະເທດ ຈຳນວນ 58 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 6,342 ຄົນ, ຍິງ 2,576 ຄົນ ຕິດພັນກັບການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ການລົງພົບປະຜູ້ມີສິດເລືອກຕັ້ງໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 2,052 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 206,557 ເທື່ອຄົນ, ຍິງ 82,877 ເທື່ອຄົນ ແລະ ໄດ້ລະດົມການຊ່ວຍເຫຼືອດ້ານວັດຖຸເຄື່ອງໃຊ້ຕ່າງໆ ໃຫ້ແກ່ປະຊາຊົນ ລວມເປັນມູນຄ່າທັງໝົດ 1,733,371,000 ກີບ.


ການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ

**ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2024 ສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມລັດຖະທຳມະນູນແລະກົດໝາຍ ໂດຍຜ່ານການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

- ພິຈາລະນາ, ຮັບຮອງບັນດາວຽກງານສຳຄັນຕ່າງໆ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ເທື່ອທີ 8 ຂອງສະພາແຫ່ງຊາດ ທັງໝົດຈຳນວນ 23 ຫົວຂໍ້ເນື້ອໃນໃຫຍ່ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 43 ສະບັບ; ໃນນີ້, ວຽກງານສະພາແຫ່ງຊາດ 3 ສະບັບ, ວຽກງານລັດຖະບານ 11 ສະບັບ, ວຽກງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ 3 ສະບັບ, ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ 3 ສະບັບ, ວຽກງານສ້າງ ແລະ ປັບປຸງກົດໝາຍ 23 ສະບັບ.
- ພິຈາລະນາ, ຮັບຮອງບັນດາຫົວຂໍ້ເນື້ອໃນ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝວິສາມັນຄະນະປະຈຳສະພາແຫ່ງຊາດ ທັງໝົດຈຳນວນ 138 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ໄດ້ຈຳນວນທັງໝົດ 137 ສະບັບ; ໃນນີ້, ວຽກງານສະພາແຫ່ງຊາດ 23 ສະບັບ, ວຽກງານລັດຖະບານ 19 ສະບັບ, ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ 94 ສະບັບແລະວຽກງານອົງການກວດສອບແຫ່ງລັດ 1 ສະບັບ.


ການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

## ສູນທອນພົດ...

(ຕໍ່ຈາກໜ້າ 1)

ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ເຊິ່ງເປັນເຫດການການເມືອງທີ່ສຳຄັນຂອງພັກ ແລະ ຂອງປະເທດເຮົາອີກຄັ້ງໜຶ່ງໃນມື້ນີ້. ພາຍຫຼັງການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເປັນເວລາ 5 ປີເຕັມ, ມື້ນີ້ ເປັນມື້ທີ່ມີຄວາມໝາຍສຳຄັນເປັນພິເສດອີກວັນໜຶ່ງ ທີ່ພັກເຮົາໄດ້ມີພິທີເປີດການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ. ການເປີດຂຶ້ນ ແລະ ດຳເນີນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກຄັ້ງນີ້ຖືໄດ້ວ່າເປັນເຫດການການເມືອງທີ່ສຳຄັນໜຶ່ງຂອງພັກແລະຂອງປະເທດຊາດເຮົາ, ເຊິ່ງກອງປະຊຸມຄັ້ງນີ້ ຈະໄດ້ທົບທວນຄືນຜົນຂອງການຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ຈະເປັນການກຳນົດແນວທາງ, ນະໂຍບາຍ ແລະ ແຜນປະຕິບັດງານຂອງພັກແລະຂອງປະເທດ ໃນ 5 ປີຕໍ່ໜ້າ ແລະ ອາດຈະໄດ້ກຳນົດວິໄສທັດຍາວໄປກວ່ານັ້ນ ເພື່ອສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງການປ່ຽນແປງໃໝ່ຂອງພັກ ສູ່ລວງເລິກຕໍ່ໆໄປ, ກອງປະຊຸມໃຫຍ່ຂອງພວກເຮົາ ໄດ້ເປີດຂຶ້ນ ແລະ ຈະໄດ້ດຳເນີນເປັນເວລາ 3 ວັນເຕັມ ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ປວງຊົນລາວທັງຊາດ ຫາກໍສຳເລັດການສະເຫຼີມສະຫຼອງບັນດາເຫດການສຳຄັນທາງປະຫວັດສາດຂອງພັກ, ຂອງຊາດເຮົາ ດ້ວຍບັນຍາກາດ ແລະ ດ້ວຍຄວາມເອກອ້າງທະນົງໃຈໃນປີຜ່ານມາ.

ພາຍຫຼັງການຫ້າງຫາກະກຽມຮອບດ້ານເປັນເວລາຍາວນານມານັ້ນ, ມາບັດນີ້ ຂະບວນການທຸກດ້ານໄດ້ມີຄວາມພ້ອມຢ່າງຮອບດ້ານແລ້ວ; ມາຮອດມື້ນີ້ ແລະ ເວລານີ້ ພວກເຮົາໄດ້ມີເງື່ອນໄຂ ແລະ ຄວາມພ້ອມທຸກປະການສຳລັບການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວຂອງພວກເຮົາແລ້ວ. ໃນໂອກາດອັນມີຄວາມໝາຍສຳຄັນນີ້, ຕາງໜ້າຄະນະບໍລິຫານງານສູນກາງພັກ ກໍຄືຄະນະປະທານກອງປະຊຸມໃຫຍ່, ຂ້າພະເຈົ້າ ຂໍສະແດງຄວາມຊົມຊື່ນຍິນດີ... ຂໍສະແດງຄວາມຂໍ່ານັບຊົມເຊີຍບັນດາສະຫາຍອະດີດການນຳ, ສະຫາຍກຳມະການສູນກາງພັກ ສະໄໝທີ XI, ບັນດາສະຫາຍຜູ້ແທນແລະແຂກຂອງກອງປະຊຸມໃຫຍ່ ທີ່ໄດ້ນຳເອົາອາລົມຈິດ, ຄວາມເຊື່ອໝັ້ນ, ກຳລັງໃຈ ແລະ ຄຳອວຍພອນຂອງສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນຕ່າງໆ ໃນທົ່ວປະເທດມາສູ່ກອງປະຊຸມໃຫຍ່ຂອງພວກເຮົາ. (ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ!)

ຮຽນ: ກອງປະຊຸມໃຫຍ່, ພວກເຮົາມີຄວາມພາກພູມໃຈ ແລະ ເບີກບານມ່ວນຊື່ນ ຕໍ່ຜົນສຳເລັດອັນສຳຄັນຫຼາຍດ້ານທີ່ບັນລຸໄດ້ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນຕະຫຼອດໄລຍະ 50 ປີຜ່ານມາ ກໍຄືໃນໄລຍະ 5 ປີແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ. ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ເຫັນວ່າແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານສືບຕໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າເຮັດໃຫ້ປະເທດຊາດອັນແສນຮັກຂອງພວກເຮົາ ມີສະຖຽນລະພາບທາງການເມືອງອັນໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ການພັດທະນາເສດຖະກິດເຖິງວ່າມີຄວາມຫຍຸ້ງຍາກ, ແຕ່ກໍມີທ່ວງທ່າຂະຫຍາຍຕົວຕໍ່ເນື່ອງ, ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີເປັນປຶກແຜ່ນ ທັງມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກແລະການຄຸ້ມຄອງບໍລິຫານຂອງລັດ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ກໍໄດ້ຮັບການປັບປຸງ, ຍົກລະດັບດີຂຶ້ນເປັນກ້າວໆ; ອົງການຈັດຕັ້ງໃນລະບົບການເມືອງ ໄດ້ຮັບການປັບປຸງສູ່ຄຸນນະພາບໃໝ່ ເຊິ່ງໄດ້ຕັ້ງໜ້າເສີມຂະຫຍາຍ ແລະ ປະຕິບັດພາລະບົດບາດຂອງຕົນໄດ້ຢ່າງເປັນເຈົ້າການ; ການເຄື່ອນໄຫວຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງບັນດາອົງການລັດ ໄດ້ຮັບການຍົກລະດັບໃຫ້ມີປະສິດທິພາບກວ່າເກົ່າ; ການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດສາກົນ ໄດ້ຮັບການຍົກລະດັບແລະຂະຫຍາຍຕົວສູ່ລວງເລິກ, ນຳເອົາຜົນປະໂຫຍດມາສູ່ປະຊາຊົນ ແລະ ປະເທດຊາດ ເຮັດໃຫ້ບົດບາດອິດທິພົນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການເຊີດຊູໃຫ້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ປະເທດຊາດອັນແສນຮັກຂອງພວກເຮົາສືບຕໍ່ສ້າງໄດ້ພື້ນຖານອັນໜັກແໜ້ນ ເພື່ອກ້າວຂຶ້ນສູ່ຈຸດໝາຍທີ່ວາງໄວ້.

ໃນເວລານາທີແລະບັນຍາກາດອັນມີຄວາມໝາຍສຳຄັນຄືແນວນີ້, ພວກເຮົາຍິ່ງມີຄວາມອາໄລອາວອນ, ຄວາມຮູ້ບຸນຄຸນອັນເລິກເຊິ່ງຕໍ່ການເສຍສະຫຼະອັນໃຫຍ່ຫຼວງ ແລະ ຈົດຈຳລ້ຳລຶກຜົນງານອັນຍິ່ງໃຫຍ່ຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກ ແລະບັນດາສະຫາຍການນຳຮຸ່ນກໍ່ຕັ້ງ ແລະ ສືບທອດຂອງພັກເຮົາ ກໍຄືສະມາຊິກພັກ-ພະນັກງານນັກຮົບແລະປະຊາຊົນລາວຜູ້ຮັກຊາດ ທີ່ໄດ້ອຸທິດຕົນເພື່ອພາລະກິດປະຕິວັດ, ເພື່ອຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດແລະຄວາມຜາສຸກຂອງປະຊາຊົນເຮົາ; ເນື່ອງໃນວາລະທີສຳຄັນນີ້, ຂ້າພະເຈົ້າ ຂໍຮຽນເຊີນຄະນະປະທານ, ບັນດາສະຫາຍຜູ້ແທນ ແລະ ແຂກກອງປະຊຸມໃຫຍ່ ຈົ່ງພ້ອມກັນລຸກຂຶ້ນກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງບັນດາສະຫາຍທີ່ໄດ້ລ່ວງລັບໄປເຫຼົ່ານັ້ນ.

- ຄະນະປະທານກອງປະຊຸມໃຫຍ່ ທີ່ນັບຖື,

-ບັນດາສະຫາຍຜູ້ແທນ, ແຂກຜູ້ມີກຽດ ທີ່ຮັກແພງ.

ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກຄັ້ງນີ້ ໄດ້ດຳເນີນໃນຈຸດເວລາທີ່ໂລກຂອງພວກເຮົາ ມີການປ່ຽນແປງອັນໃຫຍ່ຫຼວງຫຼາຍດ້ານ, ໂດຍສະເພາະແມ່ນຄວາມກ້າວໜ້າຂອງວິທະຍາສາດ-ເຕັກໂນໂລຊີທີ່ກ້າວກະໂດດ ເຊິ່ງໄດ້ເປັນປັດໄຈສຳຄັນຍູ້ແຮງການພັດທະນາຂອງໂລກໄປສູ່ບາດກ້າວໃໝ່, ແຕ່ພ້ອມກັນນັ້ນ ກໍເກີດສິ່ງທ້າທາຍທົດສອບໃໝ່ຫຼາຍປະການທີ່ສົ່ງຜົນກະທົບຕໍ່ປະເທດຂອງພວກເຮົາ, ໃນຂະນະດຽວກັນ ພັກຂອງພວກເຮົາກໍຕ້ອງໄດ້ສະແຫວງຫາເສັ້ນທາງການພັດທະນາທີ່ສອດຄ່ອງກັບຈຸດພິເສດຂອງປະເທດ ແລະ ປັບຕົວໃຫ້ທັນກັບສະພາບການປ່ຽນແປງໃໝ່ຂອງຍຸກສະໄໝ.

ພັກເຮົາ ທີ່ໄດ້ຮັບການສ້າງຕັ້ງຂຶ້ນມາໄດ້ 7 ທົດສະວັດມາແລ້ວນັ້ນ ເປັນ 7 ທົດສະວັດທີ່ໄດ້ຜ່ານການຝຶກຝົນ, ທົດສອບອັນລະອຽດລະອ້ຽວ, ຫຍຸ້ງຍາກລຳບາກ ແລະ ໄດ້ປັບປຸງ-ກໍ່ສ້າງຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ, ສາມາດນຳພາພາລະກິດປະຕິວັດຍາດໄດ້ໄຊຊະນະເປັນກ້າວໆມາ, ສ້າງວິລະກຳອັນສະຫງ່າລາສີເຊິ່ງໄດ້ຈາລຶກໄວ້ໃນໜ້າປະຫວັດສາດຂອງຊາດລາວຍຸກໃໝ່ນັ້ນ ແມ່ນການເຮັດສຳເລັດພາລະກິດຕໍ່ສູ້ປົດປ່ອຍຊາດໄດ້ຢ່າງສົມບູນ, ຍາດເອົາເອກະລາດແຫ່ງຊາດ, ອິດສະຫຼະພາບແລະຄວາມເປັນເຈົ້າຂອງປະເທດຊາດອັນແທ້ຈິງມາສູ່ກຳມືຂອງປະຊາຊົນລາວ, ສ້າງຕັ້ງລະບອບປະຊາທິປະໄຕປະຊາຊົນຂຶ້ນມາໄດ້ ແລະ ນັບແຕ່ມື້ນັ້ນມາ ພັກເຮົາໄດ້ກາຍເປັນພັກກຳອຳນາດ ມາໄດ້ 50 ປີ ແລ້ວ ແລະ ພັກເຮົາຍັງມີພາລະກຳອັນໃຫຍ່ຫຼວງ ເພື່ອສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ສ້າງຄວາມສາມາດຕົວຈິງເພື່ອນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມ.

ຕະຫຼອດໄລຍະ 70 ປີຂອງການຄົງຕົວແລະຂະຫຍາຍຂອງພັກເຮົາ ໄດ້ຂໍ້ສະຫຼຸບທີ່ຢືນຢັນຢ່າງຈະແຈ້ງວ່າ ການນຳພາຂອງພັກເຮົາ ເປັນປັດໄຈພື້ນຖານສຳຄັນກວ່າໝູ່ຕໍ່ຜົນສຳເລັດຂອງການປະຕິວັດປະເທດເຮົາ ແລະ ພັກໄດ້ສືບຕໍ່ນຳພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດສືບຕໍ່ມາ ແລະ ພັກເຮົາຍັງຕ້ອງຮັບເອົາພາລະກຳອັນໃຫຍ່ຫຼວງ ແລະ ສູງສົ່ງ ເພື່ອສ້າງບາດກ້າວເດີນສືບຕໍ່ໄປ ຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຕາມອຸດົມການທີ່ໄດ້ເລືອກເອົາໄວ້. ອຸດົມການອັນບໍລິສຸດຜຸດຜ່ອງຢ່າງສະເໝີຕົ້ນສະເໝີປາຍຂອງພັກເຮົາ ຕະຫຼອດ 70 ປີນັ້ນ ແມ່ນຍາມໃດກໍຈົງຮັກພັກດີຕໍ່ຜົນປະໂຫຍດອັນເປັນພື້ນຖານຂອງປະຊາຊົນຊາວຜູ້ອອກແຮງງານລາວບັນດາເຜົ່າ, ພັກເຮົາບໍ່ມີຜົນປະໂຫຍດອື່ນໃດນອກຈາກເຮັດທຸກສິ່ງທຸກຢ່າງເພື່ອຄວາມເປັນເອກະລາດ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ, ເພື່ອຄວາມເປັນອິດສະຫຼະພາບ, ຄວາມຮົ່ມເຢັນເປັນສຸກຂອງປະຊາຊົນລາວທຸກທົ່ວໜ້າ. ນັບແຕ່ມື້ສ້າງຕັ້ງຂຶ້ນ, ພັກເຮົາໄດ້ຍຶດໝັ້ນໃນສິ່ງທີ່ພັກຢືນຢັນມາແຕ່ຫົວທີວ່າ ລັກສະນະຂອງການປະຕິວັດຢູ່ປະເທດເຮົາ ແມ່ນການປະຕິວັດຊາດ-ປະຊາທິປະໄຕພາຍໃຕ້ການນຳພາຂອງພັກຂອງຊົນຊັ້ນກຳມະກອນແລະຈຸດປະສົງສຸດທ້າຍ ບໍ່ແມ່ນຢຸດຢູ່ໃນການໄດ້ມາເຊິ່ງເອກະລາດແຫ່ງຊາດ ແລະ ຄວາມເປັນປະຊາທິປະໄຕແບບໃໝ່ເທົ່ານັ້ນ ຫາກຍັງຕ້ອງນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມ, ຈຸດໝາຍດັ່ງກ່າວ ແມ່ນເສັ້ນທາງທີ່ຕ້ອງເປັນໄປຂອງການປະຕິວັດຢູ່ປະເທດເຮົາ ພາຍໃຕ້ການນຳຂອງພັກປະຊາຊົນປະຕິວັດລາວ.

ບັນດາສະຫາຍທີ່ຮັກແພງ,

ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກເຮົາຈະໄດ້ດຳເນີນພາຍໃຕ້ຄຳຂວັນ "ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ໜັກແໜ້ນກ້າວຂຶ້ນສູ່ສັງຄົມນິຍົມ".

ບັນດາສະຫາຍ ທີ່ນັບຖື ແລະ ຮັກແພງ,

ຢືນຢູ່ຕໍ່ໜ້າສະພາບການໃໝ່, ຄວາມຮຽກຮ້ອງຕ້ອງການໃໝ່ຂອງການປະຕິວັດຂອງປະເທດເຮົາ ເພື່ອສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກນັ້ນ, ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກເຮົາ ຈະໄດ້ພິຈາລະນາ ແລະ ຮັບຮອງເອົາໂຄງການການເມືອງຂອງພັກສະບັບທີ III ເຊິ່ງຈະໄດ້ຢືນຢັນແລະກຳນົດຈຸດໝາຍ, ເສັ້ນທາງກ້າວເດີນຂອງປະເທດຊາດຮອດປີ 2055 ເພື່ອສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ໜັກແໜ້ນກ້າວຂຶ້ນສູ່ຈຸດໝາຍປາຍທາງຂອງການປະຕິວັດ; ພວກເຮົາຍັງຈະໄດ້ພ້ອມກັນພິຈາລະນາ ແລະ ຮັບຮອງເອົາຮ່າງລາຍງານການເມືອງ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເຊິ່ງນອກຈາກການຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາສະບັບທີ IX ແລ້ວ, ພວກເຮົາຍັງຈະໄດ້ວາງແນວທາງ, ແຜນນະໂຍບາຍ, ວິໄສທັດຮອດປີ 2055, ຍຸດທະສາດພັດທະນາ 10 ປີ (2026-2035) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ເພື່ອຜັນຂະຫຍາຍໂຄງການການເມືອງຂອງພັກ ໃຫ້ເປັນອັນລະອຽດຕື່ມອີກ. ນອກນັ້ນ, ກອງປະຊຸມໃຫຍ່ຂອງພວກເຮົາໃນຄັ້ງນີ້ຈະໄດ້ພິຈາລະນາແລະຮັບຮອງເອົາຮ່າງກົດລະບຽບສະບັບປັບປຸງຂອງພັກເພື່ອແນໃສ່ສ້າງພັກເຮົາໃຫ້ນັບມື້ເຕີບໃຫຍ່ ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ຍົກສູງບົດບາດການນຳພາທີ່ເຂັ້ມແຂງ, ກ້າວຂຶ້ນເຮັດຫຼ້ອນພາລະກຳປະຫວັດສາດອັນມີກຽດສະຫງ່າຂອງຕົນໃນໄລຍະໃໝ່.

ໜ້າທີ່ສຳຄັນອັນໜຶ່ງອີກຂອງກອງປະຊຸມໃຫຍ່ ແມ່ນຈະໄດ້ດຳເນີນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ທີ່ສະແດງອອກເຖິງຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງທົ່ວພັກ, ຮັບປະກັນລັກສະນະສືບທອດປ່ຽນແທນ ແລະ ເຮັດໃຫ້ຖັນແຖວການນຳຂັ້ນຍຸດທະສາດຂອງສູນກາງພັກເຮົາ ນັບມື້ນັບໜຸ່ມແໜ້ນ, ເຕັມໄປດ້ວຍສະຕິປັນຍາ, ຄວາມຊື່ສັດ-ບໍລິສຸດຜຸດຜ່ອງ ແລະ ຈົງຮັກພັກດີຕໍ່ອຸດົມການຂອງພັກ ກໍຄືເສັ້ນທາງກ້າວເດີນຂອງປະເທດຊາດ, ສາມາດແບກຫາບພາລະໜ້າທີ່ອັນໜັກໜ່ວງທີ່ພັກແລະປະຊາຊົນມອບໝາຍໃຫ້.

ບັນດາສະຫາຍທີ່ຮັກແພງ,

ວຽກງານຕ່າງໆຂອງກອງປະຊຸມໃຫຍ່ກໍຄືທິດທາງ, ໜ້າທີ່ທີ່ກ່າວມານັ້ນລ້ວນແຕ່ເປັນບັນຫາຍຸດທະສາດສຳຄັນໃນການນຳພາຂອງພັກເຮົາທີ່ພົວພັນເຖິງການກຳນົດຊາຕາກຳຂອງປະເທດຊາດ ແລະ ຂອງປະຊາຊົນເຮົາ. ຂ້າພະເຈົ້າ ມີຄວາມເຊື່ອໝັ້ນ ແລະ ຫວັງເປັນຢ່າງຍິ່ງວ່າ ບັນດາສະຫາຍຜູ້ແທນກອງປະຊຸມໃຫຍ່ ຈະເຊີດຊູຄວາມຮັບຜິດຊອບການເມືອງໃຫ້ສູງຂຶ້ນ, ເສີມຂະຫຍາຍປະຊາທິປະໄຕຢ່າງແຂງແຮງ, ສຸມຈິດສຸມໃຈ ແລະ ສະຕິປັນຍາ ເຂົ້າໃສ່ການຄົ້ນຄວ້າ, ຄຶດຫງໍາ ແລະ ປະກອບຄວາມເຫັນເພື່ອປັບປຸງ, ບູລະນະແນວທາງ, ແຜນນະໂຍບາຍ ໃຫ້ຖືກຕ້ອງ, ສອດຄ່ອງ ແລະ ແທດກັບຄວາມເປັນຈິງ, ຕົກລົງບັນຫາຕ່າງໆທີ່ກອງປະຊຸມຍົກຂຶ້ນດ້ວຍມານະຈິດປະຕິວັດບຸກ ເຮັດໃຫ້ກອງປະຊຸມໃຫຍ່ຂອງພັກເຮົາບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ທຸກປະການ.

ໃນນາມຄະນະປະທານກອງປະຊຸມໃຫຍ່, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

**(ຂໍຂອບໃຈ)**

## ຮ່າງໂຄງການ...

(ຕໍ່ຈາກໜ້າ 1)

ສະຫວ່າງເຍືອງທາງນຳພາປະຊາຊົນລາວ ຕໍ່ສູ້ປະຕິວັດ ຈົນເຖິງກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ. ໂຄງການການເມືອງສະບັບທີ II ໄດ້ສ້າງຂຶ້ນໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ II ຂອງພັກ ຈັດຂຶ້ນໃນວັນທີ 03-06 ກຸມພາ 1972; ໂຄງການການເມືອງສະບັບນີ້ ແມ່ນການວາງແນວທາງຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດລ່າເມືອງຂຶ້ນແບບໃໝ່ດ້ວຍຄຳຂວັນ ດຳເນີນການປະຕິວັດຊາດປະຊາທິປະໄຕ ເພື່ອນຳເອົາເອກະລາດແຫ່ງຊາດ, ລົບລ້າງລະບອບລາຊາທິປະໄຕ ກ້າວໄປເຖິງການສະຖາປະນາລະບອບໃໝ່ຂຶ້ນໃນປະເທດລາວ... ໂຄງການການເມືອງທັງສອງສະບັບຂອງພັກ ໄດ້ຮັບການປະຕິບັດຢ່າງມີຜົນສຳເລັດອັນສະຫງ່າລາສີ ເຊິ່ງນຳມາເຖິງການສຳເລັດພາລະກິດປົດປ່ອຍຊາດ, ຍາດໄດ້ເອກະລາດແຫ່ງຊາດ, ອຳນາດອະທິປະໄຕ ແລະ ກ້າວເຖິງການສະຖາປະນາ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975.

50 ປີ ແຫ່ງການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊາຊົນລາວ ຜ່ານມາ ເປັນ 50 ປີທີ່ພັກເຮົາ ໄດ້ກາຍເປັນພັກກຳອຳນາດ, ນຳພາຮຳບາດແຜສົງຄາມ, ຟື້ນຟູເສດຖະກິດຂອງຊາດ ແລະ ໄລຍະຕໍ່ມາ ພັກເຮົາ ພາຍໃຕ້ການນຳຂອງປະທານ ໄກສອນ ພົມວິຫານ ໄດ້ກຳນົດແນວທາງປ່ຽນແປງໃໝ່ເຊິ່ງເປັນການສ້າງການຫັນປ່ຽນທາງດ້ານຈິນຕະນາການ ໃຫ້ຖືກຕ້ອງສອດຄ່ອງກັບຈຸດພິເສດຂອງປະເທດ ແລະ ການປ່ຽນແປງຂອງໂລກ, ໄດ້ກາຍເປັນທອນໄຟແຫ່ງແສງສະຫວ່າງດວງໃໝ່ທີ່ເກີດຂຶ້ນໃນປະເທດເຮົາ ແລະ ທອນໄຟດວງນີ້ ໄດ້ເປັນເຂັມທິດເຍືອງທາງໃຫ້ພັກເຮົາເດີນຕາມ ໂດຍໃຊ້ເວລາ40 ປີຜ່ານມາ ແລະ ແນວທາງປ່ຽນແປງໃໝ່ນີ້ຍັງສືບຕໍ່ເປັນທິດນຳໃຫ້ພວກເຮົາເດີນຕາມຕໍ່ໆໄປຢ່າງບໍ່ທໍ້ຖອຍ ເພາະວ່າແນວທາງປ່ຽນແປງໃໝ່ ເປັນແນວທາງທີ່ກຳນົດອອກມາຢ່າງເປັນລະບົບຄົບຊຸດ ລວມທັງຈຸດເລີ່ມ ແລະ ການຕີຂອບທີ່ຮັດກຸມ ແລະ ຈັດວາງບຸລິມະສິດໃນຂົງເຂດທີ່ຕ້ອງປ່ຽນແປງ, ສ້າງໄດ້ຄວາມຮັບຮູ້ໃໝ່ດ້ານທິດສະດີກ່ຽວກັບສັງຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນຂອງປະເທດເຮົາ ຢ່າງແທດເໝາະກັບຄວາມສາມາດທີ່ອຳນວຍໃຫ້ ໃນແຕ່ລະໄລຍະ ເຊິ່ງຖືໄດ້ວ່າ ແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກທີ່ວາງອອກ ແລະ ການທີ່ພັກເຮົານຳພາເຂົ້າສູ່ການປະຕິບັດ ຜ່ານ 40 ປີມານີ້ ແມ່ນໄດ້ນຳປະເທດເຮົາ ສາມາດຜ່ານພົ້ນພະຍຸລົມແດງ ແລະ ສິ່ງທ້າທາຍທົດສອບອັນລະອິດລະອ້ຽວຂ້ຽວຂາດມາໄດ້, ລະບອບປະຊາທິປະໄຕປະຊາຊົນຂອງພວກເຮົາໄດ້ຮັບການບູລະນະໃຫ້ເປັນລະບົບ, ຕໍ່ເນື່ອງ ແລະ ນັບມື້ນັບສົມບູນຍິ່ງໆຂຶ້ນ.

ການສ້າງໂຄງການການເມືອງສະບັບທີ III ຂຶ້ນມານີ້ ແມ່ນການສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ທີ່ປະທານ ໄກສອນ ພົມວິຫານ ເປັນຜູ້ລິເລີ່ມແລະເປັນສະຖາປະນິກຕົ້ນຕໍທີ່ປະໄວ້ໃຫ້ພວກເຮົາສືບທອດຕໍ່ໄປຢ່າງບໍລິສຸດ ແລະ ຈົງຮັກພັກດີ. ຕະຫຼອດໄລຍະ 70 ປີ ແຫ່ງການນຳພາຂອງພັກເຮົາໃນພາລະກິດຕໍ່ສູ້ກູ້ຊາດ ກໍຄືພາລະກິດແຫ່ງການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ, ພັກເຮົາ ສາມາດສະຫຼຸບສັງລວມໄດ້ 6 ບົດຮຽນທີ່ມີລັກສະນະເປັນກົດເກນຂອງການປະຕິວັດລາວ ເຊັ່ນ:

ໜຶ່ງ, ການນຳພາຂອງພັກ ແມ່ນປັດໄຈຕັດສິນທຸກໄຊຊະນະຂອງການປະຕິວັດລາວ; ພັກຕ້ອງຢຶດໝັ້ນອຸດົມການສັງຄົມນິຍົມ, ຢຶດຖືເອົາລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກ ເພື່ອຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວຂອງພັກໃນແຕ່ລະໄລຍະ;

ສອງ, ການສ້າງຄວາມສາມັກຄີເປັນເອກະພາບສູງພາຍໃນພັກ ເປັນໃຈກາງແຫ່ງການເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນລາວທັງຊາດ;

ສາມ, ຢຶດໝັ້ນແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຕິດພັນກັບແນວທາງມະຫາຊົນຂອງພັກ, ການກໍ່ສ້າງຮາກຖານການເມືອງໃຫ້ໜັກແໜ້ນ, ເຂັ້ມແຂງ;

ສີ່, ການພັດທະນາເສດຖະກິດ ຕ້ອງໝູນໃຊ້ບັນດາກົດເກນພາວະວິໄສຢ່າງຖືກຕ້ອງ ແລະ ນຳໃຊ້ໝາກຜົນຂອງການພັດທະນາວິທະຍາສາດທີ່ທັນສະໄໝ ຢ່າງເໝາະສົມ;

ຫ້າ, ປັບປຸງການບໍລິຫານລັດທີ່ປົກຄອງດ້ວຍກົດໝາຍໃຫ້ເຂັ້ມງວດ, ຮັບປະກັນໃຫ້ລັດເປັນລັດຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ ຢ່າງແທ້ຈິງພາຍໃຕ້ການນຳພາຂອງພັກ;

ຫົກ, ຍົກສູງນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຕິດພັນກັບການພົວພັນຮ່ວມມືກັບສາກົນຢ່າງຖືກຕ້ອງ.

2. ເນື້ອໃນພື້ນຖານຂອງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາ ທີ່ໄດ້ບັນຈຸເຂົ້າໃນໂຄງການການເມືອງສະບັບທີ III ຂອງພັກ ໄດ້ແກ່:

1) ຈຸດໝາຍ, ທິດທາງໃນການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ:

-ພວກເຮົາຕ້ອງມີຄວາມເປັນເອກະພາບ ຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ ແລະ ເລິກເຊິ່ງກ່ຽວກັບລະບອບປະຊາທິປະໄຕປະຊາຊົນແມ່ນລະບອບຂອງປະຊາຊົນ, ໂດຍປະຊາຊົນ, ເພື່ອປະຊາຊົນ, ອຳນາດທັງໝົດເປັນຂອງປະຊາຊົນ ພາຍໃຕ້ການນຳພາຂອງພັກ.

- ໃນດ້ານຈຸດໝາຍ: ລະບອບປະຊາທິປະໄຕປະຊາຊົນ ທີ່ປະຊາຊົນລາວບັນດາເຜົ່າ ສູ້ຊົນສ້າງໃນປັດຈຸບັນ ແມ່ນລະບອບສັງຄົມທີ່ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກເປັນປຶກແຜ່ນ, ປະຊາທິປະໄຕ, ຍຸຕິທຳ ແລະສີວິໄລ;ເມື່ອຮອດປີ2055 ທີ່ເປັນມື້ສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 100 ປີ ຈະສູ້ຊົນສ້າງປະເທດເຮົາ ໃຫ້ເປັນປະເທດກຳລັງພັດທະນາ ທີ່ມີລາຍຮັບປານກາງສູງ ແລະ ໃຫ້ຫຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ, ກຳລັງການຜະລິດໄດ້ຮັບການພັດທະນາຢ່າງຮອບດ້ານ ໂດຍມີການພົວພັນການຜະລິດທີ່ສອດຄ່ອງ ແລະ ກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ມີພື້ນຖານອັນໜັກແໜ້ນ ກ້າວສູ່ຄວາມອີ່ມໜຳສຳລານ.

- ທິດທາງຂອງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ແມ່ນຍົກສູງບົດບາດແລະຄວາມສາມາດນຳພາທີ່ເຂັ້ມແຂງຂອງພັກ ແລະ ຄະນະພັກທຸກຂັ້ນ, ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ລະດົມກຳລັງແຮງຂອງທົ່ວປວງຊົນເຂົ້າໃນການພັດທະນາເສດຖະກິດເອກະລາດເປັນເຈົ້າຕົນເອງ, ສ້າງສັງຄົມທີ່ມີຄວາມສະເໝີພາບ, ສ້າງພື້ນຖານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ ແລະ ເປີດກວ້າງການພົວພັນຮ່ວມມືບົນພື້ນຖານທີ່ຮັບປະກັນດ້ານຫຼັກການແລະຄວາມເປັນເຈົ້າຕົນເອງ.

2) ສືບຕໍ່ຍູ້ແຮງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ:

ເພື່ອເຮັດໃຫ້ຈຸດໝາຍ, ທິດທາງ ໃນການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ໄດ້ຮັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳຕົວຈິງນັ້ນ ໂຄງການການເມືອງ ສະບັບທີ III ໄດ້ວາງ 11 ແຜນນະໂຍບາຍໃຫຍ່ ດັ່ງນີ້:

ໜຶ່ງ, ພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໃຫ້ເປັນລະບົບ, ທັນສະໄໝ, ປະກອບດ້ວຍຫຼາຍພາກສ່ວນເສດຖະກິດ, ຫຼາຍຮູບແບບກຳມະສິດ, ຫຼາຍຮູບການຈັດຕັ້ງຜະລິດທຸລະກິດແລະຫຼາຍຮູບການແຈກຢາຍ, ໃນນັ້ນ ພາກສ່ວນເສດຖະກິດລັດ ດຳລົງບົດບາດເປັນເຈົ້າພາທາງ, ພາກສ່ວນເສດຖະກິດອື່ນໆປະກອບເປັນກຳລັງແຮງຂອງພື້ນຖານເສດຖະກິດແຫ່ງຊາດ.

ສອງ, ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ, ຫັນເປັນດິຈິຕອນ ບົນພື້ນຖານການຄົ້ນຄວ້າ, ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ, ເສີມຂະຫຍາຍທ່າແຮງໄດ້ປຽບ, ຄວາມສາມາດບົ່ມຊ້ອນຂອງປະເທດ; ນຳໃຊ້ເຕັກໂນໂລຊີດິຈິຕອນໃຫ້ກາຍເປັນໂອກາດ, ເປັນກຳລັງແຮງ ແລະ ເປັນພື້ນຖານໃຫ້ແກ່ການຊຸກຍູ້ຂະແໜງການຜະລິດ ແລະ ບໍລິການ ທີ່ເປັນປາຍແຫຼມ.

ສາມ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ຮັບມືກັບການປ່ຽນແປງດິນຟ້າອາກາດ; ຢຶດໝັ້ນທິດນຳຖືເອົາຄວາມກົມກຽວລະຫວ່າງການພັດທະນາເສດຖະກິດ-ສັງຄົມກັບການປົກປັກຮັກສາສິ່ງແວດລ້ອມຕາມທິດເສດຖະກິດສີຂຽວ, ເສດຖະກິດໝູນວຽນແລະຍືນຍົງ.

ສີ່, ພັດທະນາວັດທະນະທຳ-ສັງຄົມ, ປະຕິບັດຢ່າງສະເໝີຕົ້ນສະເໝີປາຍແນວທາງປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳແລະຮີດຄອງປະເພນີອັນດີງາມ; ພັດທະນາສັງຄົມຕາມທິດສັງຄົມມີປະຊາທິປະໄຕ, ຍຸຕິທຳ, ສີວິໄລ; ສ້າງສັງຄົມສາມັກຄີເປັນປຶກແຜ່ນຂອງບັນດາເຜົ່າ; ການເຄົາລົບສິດ-ເສລີພາບຂອງປະຊາຊົນ;ການສ້າງຄວາມເປັນເອກະພາບລະຫວ່າງຊັ້ນຄົນ; ສືບຕໍ່ປະຕິບັດທິດນຳເອົາການສຶກສາໄປກ່ອນກ້າວໜຶ່ງ, ເອົາການພັດທະນາວິທະຍາສາດ-ເຕັກໂນໂລຊີເປັນຂໍກຸນແຈເຮັດໃຫ້ການສຶກສາມີຄຸນນະພາບສູງຂຶ້ນ; ປະຕິບັດນະໂຍບາຍສາທາລະນະສຸກທົ່ວປວງຊົນ ໃຫ້ນັບມື້ທົ່ວເຖິງແລະ ມີຄຸນນະພາບສູງ.

ຫ້າ, ພັດທະນາຄົນລາວຢ່າງຮອບດ້ານ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່; ພັດທະນາຄົນລາວໃຫ້ມີນ້ຳໃຈຮັກຊາດອັດດູດດື່ມ ຕິດພັນກັບການຮັກລະບອບໃໝ່, ມີຄວາມກະຕັນຍູຮູ້ບຸນຄຸນຕໍ່ບັນພະບຸລຸດຂອງຊາດ, ສ້າງຄົນລາວໃຫ້ເປັນຄົນສັງຄົມນິຍົມ.

ຫົກ, ສ້າງເຫງົ້າພະລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານທີ່ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີແບບແຜນທັນສະໄໝ ດ້ວຍການຢຶດໝັ້ນແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສ້າງຄວາມອາດສາມາດບົ່ມຊ້ອນໃນແຕ່ລະດ້ານ, ສ້າງທ່າສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ພາຍໃຕ້ການນຳພາເດັດຂາດ, ໂດຍກົງ, ຮອບດ້ານ ຂອງພັກ.

ເຈັດ, ຢຶດໝັ້ນແນວທາງການຕ່າງປະເທດຂອງພັກ, ສ້າງເງື່ອນໄຂອຳນວຍໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ; ເປີດກວ້າງການພົວພັນກັບບັນດາປະເທດໃນພາກພື້ນ ແລະ ສາກົນ, ຖືສຳຄັນການຮ່ວມມືຮອບດ້ານກັບປະເທດໃກ້ຄຽງ, ເພື່ອນມິດຍຸດທະສາດ, ດຳເນີນການເຊື່ອມໂຍງ-ເຊື່ອມຈອດ ເຂົ້າກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ ແລະ ເປັນເຈົ້າຕົນເອງຂະຫຍາຍການຮ່ວມມືແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບ, ຫຼາຍລະດັບ ທັງດ້ານພັກ, ດ້ານລັດ ແລະ ການທູດປະຊາຊົນ.

ແປດ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮັບປະກັນການກຳອຳນາດຂອງພັກໃຫ້ມີຄວາມໝັ້ນຄົງ; ສ້າງຄວາມໜັກແໜ້ນດ້ານລະບົບແນວຄິດ-ທິດສະດີຂອງພັກ; ສ້າງອົງການຈັດຕັ້ງພັກແຕ່ລະຂັ້ນໃຫ້ເຂັ້ມແຂງ, ປັບປຸງແບບແຜນວິທີນຳພາ ແລະ ການເຄື່ອນໄຫວຂອງການຈັດຕັ້ງພັກຕາມກົດລະບຽບຂອງພັກ, ຮັບປະກັນລັກສະນະວິທະຍາສາດ ແລະ ປະຕິວັດ ຢ່າງໜັກແໜ້ນ; ຕໍ່ສູ້ຕ້ານການເສື່ອມຖອຍທາງດ້ານແນວຄິດ-ການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ, ບັນດາປາກົດການ "ຫັນປ່ຽນດ້ວຍຕົນເອງ", "ເສື່ອມຄຸນປ່ຽນທາດເອງ" ພາຍໃນພັກ; ສ້າງຖັນແຖວພະນັກງານ, ສະມາຊິກພັກ ໃຫ້ສົມຄູ່ກັບໜ້າທີ່ການເມືອງ; ຍົກສູງປະສິດທິພາບການຕິດຕາມກວດກາການປະຕິບັດວິໄນ ຂອງພັກ, ກົດໝາຍຂອງລັດ ຢ່າງເຂັ້ມງວດ.

ເກົ້າ, ສ້າງລັດປະຊາທິປະໄຕປະຊາຊົນທີ່ປົກຄອງດ້ວຍກົດໝາຍ, ສ້າງລັດທີ່ຖືລັດຖະທຳມະນູນ ແລະ ກົດໝາຍ ມີບົດບາດສູງສຸດ, ສ້າງລັດທີ່ຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການອຳນາດລັດເອກະພາບ, ມີການແບ່ງງານຢ່າງຈະແຈ້ງ, ສ້າງລັດໃຫ້ມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ເຮັດຫຼ້ອນພັນທະຕໍ່ພົນລະເມືອງທຸກຄົນ ແລະ ຮັບປະກັນໃຫ້ພົນລະເມືອງທຸກຄົນ ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ.

ສິບ, ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນ, ປະຕິບັດແນວທາງມະຫາສາມັກຄີທົ່ວປວງຊົນຢ່າງໜັກແໜ້ນ; ປ່ຽນແປງໃໝ່ແບບແຜນວິທີເຮັດວຽກກັບມະຫາຊົນ, ວິທີປຸກລະດົມຂົນຂວາຍມະຫາຊົນ; ສ້າງ ແລະ ແນະນຳອົງການຈັດຕັ້ງມະຫາຊົນໃຫ້ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດ, ໜ້າທີ່ຂອງຕົນ.

ສິບເອັດ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງບໍ່ຢຸດຢັ້ງ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ໂດຍເປີດໂອກາດໃຫ້ປະຊາຊົນໄດ້ເຂົ້າຮ່ວມໃນການສ້າງ ແລະ ບູລະນະແນວທາງຂອງພັກ ແລະ ກົດໝາຍຂອງລັດ ຕາມທິດທີ່ວ່າ: ໃຫ້ປະຊາຊົນຮູ້, ປະຊາຊົນປຶກສາຫາລື, ປະຊາຊົນເຂົ້າຮ່ວມຈັດຕັ້ງປະຕິບັດ, ປະຊາຊົນຕິດຕາມກວດກາ ແລະ ປະຊາຊົນໄດ້ຮັບຜົນປະໂຫຍດຢ່າງຊອບທຳ.

ໂຄງການການເມືອງຂອງພັກ ແມ່ນທິດສະດີປະຕິວັດ, ເປັນທອນໄຟອັນສະຫວ່າງສະໄຫວເຍືອງທາງໃຫ້ແກ່ພັກ ແລະ ທົ່ວປວງຊົນ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ສ້າງໄດ້ບາດກ້າວເດີນ ແລະ ບາດລ້ຽວທີ່ໜັກແໜ້ນໃຫ້ແກ່ພາລະກິດແຫ່ງການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນກ້າວຂຶ້ນສູ່ສັງຄົມນິຍົມ.

ດ້ວຍເຫດນັ້ນ ຈຶ່ງຮຽກຮ້ອງມາຍັງສະມາຊິກພັກ, ພະນັກງານ, ກຳລັງປະກອບອາວຸດທຸກທົ່ວໜ້າ, ປະຊາຊົນລາວບັນດາເຜົ່າ ຈົ່ງເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ເດັດດ່ຽວສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບນາໆປະການ, ຍອມເສຍສະຫຼະທຸກໆຢ່າງ ເພື່ອອຸທິດໃຫ້ແກ່ການປະກອບສ່ວນຢ່າງຕັ້ງໜ້າເພື່ອເຮັດໃຫ້ໂຄງການການເມືອງຂອງພັກສະບັບນີ້ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ, ນຳເອົາປະເທດຊາດຂອງພວກເຮົາ ກ້າວຂຶ້ນຕາມຈຸດໝາຍທີ່ວາງໄວ້ຢ່າງມີໄຊ.

# ກອງປະຊຸມສະໄໝສາມັນເທື່ອທີ 10 ສພຂ ວຽງຈັນ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ IV ໄດ້ດຳເນີນຂຶ້ນໃນວັນທີ 25-27 ທັນວາຜ່ານ ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໂດຍການເປັນປະທານຂອງທ່ານບຸນສອນ ເພັດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ; ທ່ານ ພູທະນູເພັດ ໄຊສົມບັດ ເລຂາຄະນະບໍລິຫານງານພັກແຂວງ; ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ວຽງຈັນ, ປະທານຄະນະກຳມະການປົກຄອງເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ ຕະຫຼອດຮອດພະນັກງານວິຊາການ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ພິຈາລະນາ, ຮັບຮອງເອົາບົດລາຍງານ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການ5ປີ(2026-2030), ປະຈຳປີ2026ຂອງແຂວງ;ບົດລາຍງານ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ5ປີ(2021-2025) ແລະ ທິດທາງຕໍ່ໜ້າ; ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ2025 ແລະ ທິດທາງແຜນການ 5 ປີ (2026-2030), ປະຈຳປີ 2026; ບົດລາຍງານ ຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາລັດແຂວງ; ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການ 5 ປີ (2026-2030), ປະຈຳປີ 2026; ບົດລາຍງານ ຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2024 ຂອງອົງການກວດສອບປະຈຳພາກກາງ; ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025),ປະຈຳປີ2025 ແລະ ທິດທາງແຜນການ 5 ປີ (2026-2030),ປະຈຳປີ2026 ຂອງສານປະຊາຊົນແຂວງ; ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການ 5 ປີ (2026-2030), ປະຈຳປີ 2026 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025),ປະຈຳປີ2025 ຂອງສະພາປະຊາຊົນແຂວງ ຊຸດທີ IV; ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V ແລະ ພິຈາລະນາ, ຮັບຮອງເອົາໜັງສືສະເໜີຂອງທ່ານເຈົ້າແຂວງ ກ່ຽວກັບການຂໍອະນຸມັດຮັບຮອງການສ້າງຕັ້ງຕາແສງຢູ່ 11 ເມືອງ ທົ່ວແຂວງວຽງຈັນ ສະບັບເລກທີ 246/ຈຂ.ວຈ, ລົງວັນທີ 16 ທັນວາ 2025.

**(ນາງ ບຸລາຕີ ແສນທະວົງ)**

# ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ສພຂ ບໍລິຄຳໄຊ




(ສພຂ) - ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ IV ໄດ້ດຳເນີນຂຶ້ນວັນທີ 17-19 ທັນວາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ;ໂດຍການເຂົ້າຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ-ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11, ທ່ານ ຄຳແຫວນ ປັນຍານຸວົງປະທານຄະນະກຳມະການປົກຄອງແຂວງ; ບັນດາທ່ານ ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນທີ່ເປັນພື້ນຖານຂອງແຂວງ ເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງປະຈຳປີ2025ແລະ ທິດທາງແຜນການ ປະຈຳປີ 2026;ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ແລະ ຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2024 ແລະ ການຈັດຕັ້ງປະຕິບັດຄຳແນະນຳ ຂອງອົງການກວດສອບ ໃນປີຜ່ານມາ; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025; ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ແລະ ຜົນການກວດກາຕາມຜົນການກວດສອບ ປະຈຳປີ 2023 ຂອງອົງການກວດກາລັດແຂວງ; ການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນຕໍ່ໜ້າ; ການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນຕໍ່ໜ້າ; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ຂອງສານປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມ ຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ແລະ ທິດທາງແຜນການປະຈຳປີ2026;ການປະກອບຄຳເຫັນ ຂອງອົງການແນວລາວສ້າງຊາດ ທີ່ໄດ້ຕາງໜ້າອົງການຈັດຕັ້ງມະຫາຊົນ ມີຄຳເຫັນຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ຂອງສະພາປະຊາຊົນແຂວງຊຸດທີIV ແລະ ວຽກງານຈຸດສຸມ ຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ແລະ ທິດທາງແຜນການ ປະຈຳປີ 2026; ພ້ອມນັ້ນ, ຍັງຮັບຮອງເອົາການສ້າງຕັ້ງຕາແສງຂອງແຂວງບໍລິຄຳໄຊຕາມການສະເໜີຂອງຄະນະກຳມະການປົກຄອງແຂວງ ເຊິ່ງທົ່ວແຂວງປະກອບມີ 26 ຕາແສງ ຄື: ເມືອງປາກຊັນ ມີ 3 ຕາແສງ; ເມືອງທ່າພະບາດ ມີ 3 ຕາແສງ; ເມືອງປາກກະດິງ ມີ 4 ຕາແສງ; ເມືອງບໍລິຄັນ ມີ 4 ຕາແສງ; ເມືອງຄຳເກີດ ມີ 4 ຕາແສງ; ເມືອງວຽງທອງ ມີ 5 ຕາແສງ ແລະ ເມືອງໄຊຈຳພອນ ມີ 3 ຕາແສງ.

ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການອະທິບາຍ, ຊີ້ແຈງ ຈາກທ່ານປະທານຄະນະກຳມະການປົກຄອງແຂວງ, ຫົວໜ້າພະແນກການ ຈຳນວນໜຶ່ງຕໍ່ຄຳຊັກຖາມຕ່າງໆ ຂອງກອງປະຊຸມແລະຍັງໄດ້ຈັດພິທີມອບໃບຍ້ອງຍໍຂອງທ່ານເຈົ້າແຂວງ, ຂອງທ່ານປະທານສະພາປະຊາຊົນແຂວງແກ່ບັນດາທ່ານສສຂ ແລະ ພະນັກງານ ທີ່ເປັນເສນາທິການ ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານຕະຫຼອດໄລຍະ 5 ປີຜ່ານມາ.

**(ໂສລະຢ່າ)**

# ມອບ-ຮັບລົດຖີບໃຫ້ນັກຮຽນເກັ່ງ ແລະ ນັກຮຽນທຸກຍາກພາຍໃນແຂວງບໍລິຄຳໄຊ




(ສພຂ) - ໃນວັນທີ 17 ທັນວາຜ່ານມາ ທີ່ສະພາປະຊາຊົນແຂວງ, ໄດ້ມີພິທີມອບ-ຮັບລົດຖີບ ຈຳນວນ 120 ຄັນ ທີ່ໄດ້ຮັບການສະໜັບສະໜູນຈາກໂຄງການຄະນະສັນຕິພາບ ແລະ ສາມັກຄີລາວ ແກ່ພະແນກສຶກສາການແລະກິລາແຂວງບໍລິຄຳໄຊເພື່ອນຳໄປມອບໃຫ້ຮຽນເກັ່ງ ແລະ ນັກຮຽນທຸກຍາກ ຂອງແຕ່ລະເມືອງພາຍໃນແຂວງເພື່ອເປັນກຳລັງໃຈ ແລະ ອຳນວຍຄວາມສະດວກໃນການໄປໂຮງຮຽນຂອງນ້ອງໆນັກຮຽນ; ໂດຍການກ່າວມອບຂອງທ່ານສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊແລະຕາງໜ້າຮັບໂດຍທ່ານ ລົມ ແພງສຸກ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ; ມີທ່ານ ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ແລະ ທ່ານ ນາງ ປິ່ງຄຳ ລາຊະສິມມາ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ; ການນຳຂອງແຂວງ, ສະມາຊິກສະພາປະຊາຊົນແຂວງ, ພະແນກການ, ເມືອງ, ນ້ອງນັກຮຽນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

# ພິທີປະກາດຍົກຍ້າຍແຕ່ງຕັ້ງ ພະນັກງານນຳພາ-ຄຸ້ມຄອງ



(ສພຂ) -ວັນທີ 23 ທັນວາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ມີພິທີປະກາດຍົກຍ້າຍແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ແລະ ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ; ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ຫົວໜ້າກອງບັນຊາການແລະພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ເພັດສະໄໝ ໄຊຍະທິຈັກ ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຜ່ານມະຕິຕົກລົງ ວ່າດ້ວຍການຍົກຍ້າຍພະນັກງານນຳພາ-ຄຸ້ມຄອງ ໄປຮັບໜ້າທີ່ໃໝ່ ທີ່ຕົກລົງເຫັນດີຍົກຍ້າຍທ່ານ ໄຊອຳພອນ ສີຫາວົງ ກຳມະການປະຈຳພັກແຂວງ, ຊ່ວຍວຽກທ່ານເລຂາພັກແຂວງ ໄປຮັບໜ້າທີ່ໃໝ່ຢູ່ສພຂ; ຍົກຍ້າຍທ່ານ ຄຳປຸ່ນ ສີຫາລາດ ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄປຮັບໜ້າທີ່ໃໝ່ ຢູ່ ສພຂ.

**(ລະອອງດາວ)**

# ກອງປະຊຸມສະໄໝວິສາມັນ ເທື່ອທີ 1 ສພຂ ຄຳມ່ວນ




(ສພຂ)-ວັນທີ 17 ທັນວາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ດຳເນີນກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງ ສພຂ ຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ; ເປັນກຽດເຂົ້າຮ່ວມມີທ່ານ ວັນໄຊ ພອງສະຫວັນ ເລຂາຄະນະບໍລິຫານງານພັກແຂວງຄຳມ່ວນ; ບັນດາທ່ານກຳມະການຄະນະປະຈຳພັກແຂວງ; ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ສະມາຊິກສະພາປະຊາຊົນຂັ້ນແຂວງ 10 ຕົວເມືອງ, ຫົວໜ້າພະແນກການ, ກອງບັນຊາການ ປກຊ-ປກສ, ອົງການທຽບເທົ່າຂັ້ນແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາ ແລະ ຮັບຮອງເອົາຊື່ເອີ້ນ ຄະນະກຳມະການປົກຄອງແຂວງ ແລະ ຮັບຮອງການສະເໜີແຕ່ງຕັ້ງ ທ່ານ ປອ. ສົມສະອາດ ອຸ່ນສີດາ ເປັນປະທານຄະນະກຳມະການປົກຄອງແຂວງຄຳມ່ວນ; ພ້ອມນັ້ນ, ຍັງໄດ້ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຄະນະກຳມະການປົກຄອງແຂວງຄຳມ່ວນ 16 ພາກສ່ວນຄື: 1) ກອງບັນຊາການ ທະຫານແຂວງ; 2) ກອງບັນຊາການປ້ອງກັນຄວາມສະຫງົບແຂວງ; 3) ພະແນກ ການຕ່າງປະເທດແຂວງ; 4) ຫ້ອງວ່າການແຂວງ; 5) ພະແນກ ຍຸຕິທຳແຂວງ; 6) ພະແນກ ສຶກສາທິການ ແລະ ກິລາແຂວງ; 7) ພະແນກ ວັດທະນະທຳ ແລະ ການທ່ອງທ່ຽວແຂວງ; 8) ພະແນກ ສາທາລະນະສຸກແຂວງ; 9) ພະແນກການເງິນແຂວງ; 10) ພະແນກ ກະສິກຳແລະສິ່ງແວດລ້ອມແຂວງ; 11) ພະແນກອຸດສະຫະກຳແລະການຄ້າແຂວງ; 12) ພະແນກ ໂຍທາທິການແລະຂົນສົ່ງແຂວງ; 13) ພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ; 14) ພະແນກເຕັກໂນໂລຊີແລະການສື່ສານແຂວງ; 15) ອົງການພັດທະນາ ແລະ ບໍລິຫານຕົວເມືອງທ່າແຂກ ແລະ 16) ຫ້ອງການ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ.

ກອງປະຊຸມຍັງໄດ້ພິຈາລະນາ, ຮັບຮອງ ເອົາການສະເໜີຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນ ນຳພາ-ຄຸ້ມຄອງ ຂອງແຂວງຄຳມ່ວນຄື: 1) ຮັບຮອງເອົາການຍົກຍ້າຍທ່ານເດດສັກ

ອ່ານຕໍ່ໜ້າ 12

# ກອງປະຊຸມຄົບຄະນະ 3 ກຳມະການ ສພຂ ສະຫວັນນະເຂດ ປະຈຳປີ 2025



(ສພຂ) - ວັນທີ 9 ທັນວາຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການເມືອງອາດສະພອນ ແຂວງສະຫວັນນະເຂດ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ໄດ້ຈັດກອງປະຊຸມຄົບ ຄະນະປະຈຳປີ 2025 ໂດຍການເປັນປະທານຂອງທ່ານ ສະແຫວງ ນັນທະວົງ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ມີຮອງປະທານຄະນະກຳມະການ ແລະ ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ສັງກັດຢູ່ໃນຄະນະກຳມະການ; ມີກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ກອງບັນຊາການທະຫານແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ, ກອງປະຕິບັດຄຳຕັດສິນຂອງສານປະຈຳແຂວງ, ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ຄາດຄະເນທິດທາງແຜນການ 5 ປີ ( 2026-2030), ການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ແລະ ຮ່າງມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ຄາດຄະເນທິດທາງແຜນການ 5 ປີ(2026-2030), ການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດ-ຄຳເຫັນຢ່າງກົງໄປກົງດ້ວຍຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ມີຄວາມຖືກຕ້ອງສອດຄ່ອງສາມາດນຳມາຈັດຕັ້ງປະຕິບັດຢ່າງມີຜົນສຳເລັດຕາມທິດທາງແຜນການທີ່ວາງໄວ້.

ພ້ອມນັ້ນ, ວັນທີ 9 ທັນວາຜ່ານມາ ທີ່ຫ້ອງປະຊຸມຫ້ອງການສຶກສາເມືອງອາດສະພອນ ແຂວງສະຫວັນນະເຂດ, ໄດ້ມີກອງປະຊຸມຄົບຄະນະ ປະຈຳປີ 2025 ຂອງຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ສພຂ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ; ທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ; ມີບັນດາທ່ານຮອງປະທານຄະນະກຳມະການ ແລະ ສສຊ, ສສຂ ທີ່ສັງກັດຢູ່ໃນວັດທະນະທຳ, ສັງຄົມ ແລະບັນດາເຜົ່າ; ມີຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ, ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງແລະແຂກຖືກເຊີນ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ຄາດຄະເນທິດທາງແຜນການ5ປີ(2026-2030), ການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ແລະ ຮ່າງມະຕິກອງປະຊຸມດັ່ງກ່າວ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດ-ຄຳເຫັນຢ່າງກົງໄປກົງດ້ວຍຄວາມຮັບຜິດຊອບສູງ.

ຕອນບ່າຍວັນດຽວກັນ, ທີ່ສະໂມສອນຫ້ອງວ່າການເມືອງອາດສະພອນ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໄດ້ດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2025 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ທ່ານ ທອງໃສ ອິນທິແສງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ມີບັນດາທ່ານຮອງປະທານຄະນະກຳມະການ ແລະ ສສຊ, ສສຂ ທີ່ສັງກັດຢູ່ໃນຄະນະກຳມະການ; ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ, ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນຄະນະກຳມະການເຂົ້າຮ່ວມ.

ຈຸດປະສົງເພື່ອສະຫຼຸບຕີລາຄາຄືນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ5ປີ(2021-2025) ຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ແລະ ບົດລາຍງານປີ 2025 ແລະ ທິດທາງແຜນການປີ 2026.






# ຖືເປັນກຽດປະຫວັດຂອງຊີວິດ

# ທິດດີ

ທ່ານກາງຂະບວນການສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ ເຊິ່ງມີຫຼາຍເຫດການສຳຄັນທີ່ຍິ່ງໃຫຍ່ດັ່ງເຊັ່ນ: ການໂຮມຊຸມນຸມ ແລະ ສວນສະໜາມຈາກຫຼາຍພາກສ່ວນທີ່ເດີນສະໜາມຫຼວງ ຄຽງຄູ່ກັບການຈູດພຸ, ບິນໂດຣນ ໃນຄ່ຳຄືນຂອງວັນທີ 2 ທັນວາ ຢ່າງສວຍສົດງົດງາມຢູ່ນະຄອນຫຼວງວຽງຈັນ ເຊິ່ງບັນດາທ່ານຕ່າງກໍໄດ້ເບິ່ງໄດ້ຊົມຜ່ານມາແລ້ວນໍ! ໄປຄຽງຄູ່ກັນນັ້ນ, ພັກ-ລັດ ເພິ່ນກໍໄດ້ມອບຫຼຽນກາລະນຶກ 50 ປີ ວັນສ້າງຕັ້ງ ສປປລາວ ໃຫ້ແກ່ພະນັກງານ-ລັດຖະກອນຜູ້ທີ່ມີຜົນງານປະກອບສ່ວນໃນການສ້າງສາພັດທະນາປະເທດຊາດຕະຫຼອດ 50 ປີ ທີ່ຜ່ານມາ.

ສຳລັບຜູ້ຂຽນເອງກໍມີໂອກາດໄດ້ຮັບຫຼຽນນຳເພິ່ນເຊັ່ນກັນ ແລະ ຖືເປັນກຽດປະຫວັດຂອງຊີວິດທີ່ໄດ້ປະກອບສ່ວນເປັນພະນັກງານສັງກັດຕະຫຼອດ 37 ປີ ໂດຍໄດ້ຮັບການອຸດໜູນບຳນານໃນປີ 2023; ຄວາມຮູ້ສຶກນີ້ຍິ່ງໃຫຍ່ຖືເປັນມຸງຄຸນຂອງຊີວິດເພາະວ່າການປະກອບສ່ວນດ້ວຍຜົນງານອັນນ້ອຍໆ ຂອງຕົນໃນພາລະກິດທີ່ຍິ່ງໃຫຍ່ຂອງປະເທດຊາດ, ແຕ່ການຈັດຕັ້ງພັກ-ລັດ ເພິ່ນກໍເຫັນຄວາມສຳຄັນ ໂດຍການມອບຫຼຽນກາລະນຶກ 50 ປີ ສປປລາວ ໃນຄັ້ງນີ້; ໃນເວລາໃຫ້ສຳພາດຕໍ່ນັກຂ່າວໂທລະພາບແຫ່ງຊາດ ໃນວັນທີ 28 ພະຈິກ 2025 ເຊິ່ງແມ່ນວາລະທີ່ຄະນະໂຄສະນາອົບຮົມສູນກາງພັກ ເພິ່ນຈັດຕັ້ງພິທີມອບຫຼຽນດັ່ງກ່າວ, ຕໍ່ບັນຫາໃນຕໍ່ໜ້າບຳນານແລ້ວມີແຜນຫຍັງແດ່? ຜູ້ຂຽນໃນຖານະນັກຂ່າວ-ນັກໜັງສືພິມ ກໍຍັງຈະສືບຕໍ່ຂຽນບົດ-ຂຽນຂ່າວຮັບໃຊ້ສັງຄົມຕໍ່ໄປຕາມເຫື່ອແຮງສະຕິປັນຍາ.

ເຊິ່ງໃນປັດຈຸບັນຍັງຂຽນບົດຄວາມປະຈຳຢູ່ຄໍລຳ "ນານາສາລະ" ຂອງ ໜສພ.ວຽງຈັນໃໝ່, ຄໍລຳ "ສ້າງສັນສັງຄົມ" ຂອງ ໜສພ.ຜູ້ແທນປະຊາຊົນ ອອນລາຍ; ບົດຄວາມວິເຄາະປາກົດການຫຍໍ້ທໍ້ໃນສັງຄົມຢູ່ ໜສພ.ລາວພັດທະນາ ອອນລາຍ ໃນນາມປາກກາ ທິດດີ, ແນວລາວ... ບໍ່ທໍ່ນັ້ນ, ຍັງໄດ້ຮັບກຽດໃນການສິ່ງຄວາມຮູ້ຕໍ່ໃຫ້ຮຸ່ນສືບທອດ ໂດຍການໄປເປັນວິທະຍາກອນ, ເປັນຄູຝຶກ, ເປັນອາຈານສອນຮັບເຊີນ ໃນບັ້ນຝຶກອົບຮົມການຂຽນບົດ-ຂຽນຂ່າວຕາມການເຊື້ອເຊີນໃນວົງການສື່ມວນຊົນບ້ານເຮົາ ເຊິ່ງໃນມໍ່ໆມານີ້ ກໍແມ່ນການຝຶກອົບຮົມໃນຫົວຂໍ້: ການອະທິບາຍ ແລະ ຕອບໂຕ້ເນື້ອໃນບົດເບືອນໃນສື່ອອນລາຍ ຖືເປັນຫົວຂໍ້ທີ່ວົງການສື່ບ້ານເຮົາໃຫ້ຄວາມສົນໃຈຫຼາຍ.

ການເປັນອາຈານຮັບເຊີນນີ້ ເລີ່ມມາຕັ້ງແຕ່ປີ 2007 ແລະ ສືບຕໍ່ມາເຖິງປັດຈຸບັນ ເຖິງແມ່ນວ່າຮັບອຸດໜູນບຳນານແລ້ວກໍຕາມ ເພາະຖືວ່າວິຊາອັນນີ້ມັນບໍ່ມີບຳນານ.

ຜູ້ຂຽນຄິດວ່າ: ການສິ່ງຄວາມຮູ້-ປະສົບການທີ່ຕົນມີໃຫ້ແກ່ຮຸ່ນສືບທອດຖືເປັນພາລະກິດອັນສູງສົ່ງໃນຊົ່ວຊີວິດຂອງຕົນ ທັງນີ້, ກໍເພື່ອໃຫ້ວົງການສື່ມວນຊົນ ນັບມື້ເຕີບໃຫຍ່ເຂັ້ມແຂງທາງດ້ານເນື້ອໃນເພື່ອຕິຖອຍຄຳຖາມຂອງສັງຄົມທີ່ຕັ້ງຂຶ້ນວ່າ: ເປັນຫຍັງຄົນລາວຈຶ່ງບໍ່ຄ່ອຍນິຍົມບໍລິໂພກສື່ (ເສບສື່) ຂອງຕົນເທົ່າທີ່ຄວນ. ອີກເທື່ອໜຶ່ງ ຂໍສະແດງຄວາມຮູ້ບຸນຄຸນຕໍ່ພັກ-ລັດຖະບານ ຈະຂໍຈົດຈຳເຫດການໃນຄັ້ງນີ້ຊົ່ວຊີວິດ... ກຽມພ້ອມສືບຕໍ່ອຸທິດຕົນໃນວຽກຖະແຫຼງຂ່າວສື່ມວນຊົນຈົນເຖິງວິນາທີສຸດທ້າຍຂອງຊີວິດ.

ນ້ຳໃຈວັນຊາດທີ 2 ທັນວາ ໝັ້ນຍືນ!

## ຄະນະບໍລິຫານ...

(ຕໍ່ຈາກໜ້າ 1)

ເຊິ່ງມີບັນດາສະຫາຍຄະນະບໍລິຫານງານສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ; ກອງປະຊຸມຄັ້ງນີ້, ເປັນກອງປະຊຸມທີ່ມີຄວາມໝາຍສຳຄັນ ແລະ ຖືເປັນກອງປະຊຸມສູນກາງຄັ້ງສຸດທ້າຍ ໃນສະໄໝທີ XI ເພື່ອຮັບຟັງການລາຍງານ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳຕໍ່ການກະກຽມຄວາມພ້ອມຮອບດ້ານ ເພື່ອກ້າວເຂົ້າສູ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກເຊິ່ງຈະຈັດຂຶ້ນໃນວັນທີ 6-8 ມັງກອນ 2026 ຢູ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

ໃນກອງປະຊຸມ, ຄະນະບໍລິຫານງານສູນກາງພັກ ໄດ້ພ້ອມກັນຕີລາຄາວ່າ: ຜ່ານການຫ້າງຫາກະກຽມວຽກງານຕ່າງໆ ທີ່ອະນຸກຳມະການກ່ຽວຂ້ອງໄດ້ດຳເນີນການມາຢ່າງເປັນລະບົບ ແລະ ເປັນຂະບວນກວ້າງຂວາງຢ່າງຕໍ່ເນື່ອງ, ມາຮອດເວລານີ້ ຖືໄດ້ວ່າມີຄວາມພ້ອມທີ່ສຸດແລ້ວ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ຈະໄດ້ດຳເນີນພາຍໃຕ້ຄຳຂວັນ "ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ" ເຊິ່ງຈະມີຜູ້ແທນເຂົ້າຮ່ວມທັງໝົດ 834 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກທົ່ວປະເທດຈຳນວນ421,865 ສະຫາຍ; ຖືເປັນກອງປະຊຸມທີ່ມີຄວາມໝາຍສຳຄັນປະຫວັດສາດ, ເປັນບາດລ້ຽວສຳຄັນໃນການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ ໃນການນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ເປັນບັ້ນສະຫຼຸບຖອດຖອນບົດຮຽນຈາກພຶດຕິກຳຕົວຈິງ ແລະ ເປັນຂີດໝາຍທາງການເມືອງ ແນໃສ່ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ ເພື່ອບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

ໂອກາດນີ້, ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການກະກຽມຢ່າງເປັນລະບົບຄົບຊຸດໃນໄລຍະຜ່ານມາ ເຊິ່ງເປັນຂະບວນການກະກຽມຢ່າງກວ້າງຂວາງຟົດຟື້ນຂອງກຳລັງມະຫາສາມັກຄີທົ່ວປວງຊົນ, ພ້ອມທັງເປັນການສະແດງໃຫ້ເຫັນເຖິງຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະໄໝທີ XI ຂອງພັກ ໄດ້ຢ່າງຮອບດ້ານ ເພື່ອປະກອບສ່ວນ ແລະ ສ້າງພື້ນຖານທີ່ໜັກແໜ້ນ ກ້າວເຂົ້າສູ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)



(ສພຊ) - ຕອນບ່າຍວັນອາທິດທີ 4 ມັງກອນນີ້ ທີ່ຫໍປະຊຸມແຫ່ງຊາດ, ສະຫາຍ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຫົວໜ້າກອງເລຂາກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໄດ້ຖະແຫຼງຂ່າວກ່ອນດຳເນີນກອງປະຊຸມ ວ່າ: ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ຈະໄຂຂຶ້ນຢ່າງເປັນທາງການໃນວັນທີ 6 ແລະ ຈະດຳເນີນໄປຈົນເຖິງວັນທີ8 ມັງກອນ 2026 ໃຊ້ເວລາ 3 ວັນເຕັມ ທີ່ນະຄອນຫຼວງວຽງຈັນ ເຊິ່ງຈະມີຜູ້ແທນເຂົ້າຮ່ວມ ທັງໝົດ 834 ສະຫາຍ ຍິງ 123 ສະຫາຍ ທີ່ເປັນຕົວແທນໃຫ້ແກ່ສະມາຊິກພັກທົ່ວປະເທດ 421,865 ສະຫາຍ, ຜູ້ແທນກອງປະຊຸມໃຫຍ່ແມ່ນຮັບປະກັນທາງດ້ານໂຄງປະກອບ, ມີຄຸນນະພາບ, ມີມາດຕະຖານແລະເງື່ອນໄຂຖືກຕ້ອງຄົບຖ້ວນ, ເປັນຕົວແທນຂອງບັນດາຊັ້ນຄົນ, ຊົນເຜົ່າ, ເພດ-ໄວ ແລະ ໄດ້ຜ່ານການເລືອກຕັ້ງຈາກກອງປະຊຸມໃຫຍ່ອົງຄະນະພັກກະຊວງ, ອົງການທຽບເທົ່າກະຊວງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ; ນອກນີ້, ຍັງມີແຂກຖືກເຊີນຈຳນວນ 388 ສະຫາຍ ຈະໄດ້ເຂົ້າຮ່ວມ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແມ່ນກອງປະຊຸມສຸດທີ່ມີຄວາມໝາຍສຳຄັນ ແລະ ຈະກາຍເປັນເຫດການການເມືອງ ແລະ ປະຫວັດສາດອັນໃຫຍ່ຫຼວງຂອງພັກແລະຂອງຊາດເຊິ່ງຈະດຳເນີນຂຶ້ນພາຍໃຕ້ຄຳຂວັນ "ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ" ແລະ ຈະປະກອບດ້ວຍວາລະສຳຄັນ ຄື:

1. ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາ 4 ເອກະສານສຳຄັນຄື: ຮ່າງໂຄງການການເມືອງສະບັບທີ3 ຂອງພັກ, ຮ່າງລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ຮ່າງກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XII ເຊິ່ງເອກະສານເຫຼົ່ານີ້ ຈະໄດ້ກຳນົດຍຸດທະສາດ, ແນວທາງການເມືອງ ແລະແນວທາງການຈັດຕັ້ງຂອງພັກ, ແນວທາງພັດທະນາເສດຖະກິດ-ສັງຄົມຂອງລັດ ໃນຊຸມປີຕໍ່ໜ້າຢ່າງມີວິທະຍາສາດແລະແທດກັບສະພາບຄວາມເປັນຈິງຂອງ ສປປລາວ.

ເພື່ອຮັບປະກັນໃຫ້ການກະກຽມບັນດາເອກະສານສຳຄັນຂອງກອງປະຊຸມໃຫຍ່ ມີເນື້ອໃນທີ່ອຸດົມສົມບູນ, ເລິກເຊິ່ງ, ໜັກແໜ້ນ, ມີປະຊາທິປະໄຕ ອະນຸກຳມະການທີ່ກ່ຽວຂ້ອງ ໄດ້ສຸມໃສ່ຄົ້ນຄວ້າ, ກັ່ນກອງ, ປຶກສາຫາລື ແລະ ນຳເອົາເນື້ອໃນເອກະສານດັ່ງກ່າວ ລົງທາບທາມ, ລະດົມຄວາມເຫັນຢ່າງກວ້າງຂວາງ ດ້ວຍຫຼາກຫຼາຍຮູບແບບ ທັງຢູ່ສູນກາງ, ທ້ອງຖິ່ນ ແລະ ທັງໄດ້ໄປແລກປ່ຽນນຳປະເທດເພື່ອນມິດຍຸດທະສາດ ແລ້ວປັບປຸງຫຼາຍຫຼົບຫຼາຍຕ່າວ ເພື່ອເຮັດໃຫ້ເອກະສານຂອງກອງປະຊຸມໃຫຍ່ ກາຍເປັນຄັງສາງແຫ່ງສະຕິປັນຍາຂອງທົ່ວປວງຊົນລາວທັງຊາດຢ່າງແທ້ຈິງ.

2. ກອງປະຊຸມຍັງຈະໄດ້ດຳເນີນການເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ ສະໄໝທີ XII ທີ່ເປັນອົງການນຳພາສູງສຸດຂອງພັກ ຕະຫຼອດສະໄໝທີ XII ເພື່ອແບກຫາບ ພາລະໜ້າທີ່ອັນໜັກໜ່ວງ ທີ່ພັກ ກໍຄືປະຊາຊົນໄດ້ມອບໝາຍໃຫ້. ບົນຈິດໃຈທີ່ຕ້ອງຮັບປະກັນການກະກຽມດ້ານບຸກຄະລາກອນ, ກອງປະຊຸມໃຫຍ່ດຳເນີນໄປຢ່າງຖືກຕ້ອງຕາມກົດລະບຽບຂອງພັກ ແລະ ມີປະຊາທິປະໄຕ ອະນຸກຳມະການຮັບຜິດຊອບ ໄດ້ເປັນເຈົ້າການຄົ້ນຄວ້າ, ອອກນິຕິກຳທີ່ກ່ຽວຂ້ອງ ແລະ ນຳພາການທາບທາມບຸກຄະກອນຢ່າງເປັນລະບົບຕໍ່ເນື່ອງ ແຕ່ຮາກຖານຂຶ້ນມາ ດ້ວຍວິທີການ ແລະ ຮູບແບບທີ່ເໝາະສົມ ເພື່ອຮັບປະກັນໃຫ້ຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເປັນຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ, ປ່ຽມລົ້ນໄປດ້ວຍສະຕິປັນຍາ, ຊື່ສັດບໍລິສຸດຜຸດຜ່ອງ, ຈົງຮັກພັກດີ, ນຳພາທົ່ວພັກ ຈັດຕັ້ງປະຕິບັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ມີຜົນສຳເລັດຕົວຈິງ.

ໂດຍລວມແລ້ວ, ຜ່ານຂະບວນການຫ້າງຫາກະກຽມຢ່າງເປັນລະບົບ ແຕ່ປີ 2023 ເປັນຕົ້ນມາ ແລະ ພາຍໃຕ້ການນຳພາ-ຊີ້ນຳຢ່າງຈິດ ຈໍ່ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ສາມາດເວົ້າໄດ້ວ່າ ການກະກຽມກອງປະຊຸມໃຫຍ່ຂອງພັກເຮົາ ແມ່ນຂະບວນການອັນກວ້າງຂວາງຂອງມະຫາຊົນ ເຊິ່ງເປັນໝາກຜົນ ແລະ ການປະກອບສ່ວນອັນສຳຄັນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະໄໝທີXI ຂອງພັກ ທີ່ໄດ້ດຳເນີນໄປຢ່າງເລິກເຊິ່ງ, ຮອບດ້ານ ແລະ ມີຜົນສຳເລັດສຳຄັນໃຫຍ່ຫຼວງຫຼາຍດ້ານຜ່ານມາ, ສ້າງພື້ນຖານທີ່ໜັກແໜ້ນ ໃຫ້ກັບບາດກ້າວກໍຄືຍ່ານທາງສືບຕໍ່ຈັດຕັ້ງປະຕິບັດໃນສະໄໝທີ XII ຂອງພັກ.

ມາຮອດເວລານີ້, ຖືເປັນເວລາອັນມີສະຫງ່າລາສີ, ເປັນເວລາທີ່ມີຄວາມສຸກງອມ ແລະ ເປັນເວລາທີ່ພວກເຮົາໄດ້ມີຄວາມພ້ອມຢ່າງຮອບດ້ານແລ້ວ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີXIIຂອງພັກປະຊາຊົນປະຕິວັດລາວ ທີ່ກຳລັງຈະໄຂຂຶ້ນຢ່າງເປັນທາງການໃນວັນທີ 6-8 ມັງກອນທີ່ຈະມາເຖິງນີ້; ໃນນາມຕາງໜ້າກອງເລຂາກອງປະຊຸມໃຫຍ່, ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ຈົ່ງພ້ອມກັນອອກແຮງແຂ່ງຂັນກັນສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ດ້ວຍຄວາມພາກພູມໃຈ ແລະ ເປັນຂະບວນຟົດຟື້ນ.

ໃນໄລຍະດຳເນີນກອງປະຊຸມໃຫຍ່, ຍັງຈະມີຂ່າວປະຈຳວັນເພື່ອແຈ້ງໃຫ້ທົ່ວປວງຊົນລາວທັງຊາດ ໄດ້ຮັບຊາບຜົນຂອງການດຳເນີນກອງປະຊຸມໃຫຍ່ໃນແຕ່ລະວັນ ແລະ ພາຍຫຼັງສຳເລັດການດຳເນີນກອງປະຊຸມໃຫຍ່, ຂ້າພະເຈົ້າຍັງຈະລາຍງານຜົນສຳເລັດກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ສຳນັກຂ່າວ ແລະ ທົ່ວປວງຊົນລາວທັງຊາດ ໄດ້ຮັບຊາບຢ່າງເປັນທາງການຕື່ມອີກ.



## ສຸກສະບາຍຫາຍໂຣຄາ

# ປະໂຫຍດຈາກນໍ້າເຜິ້ງ

# ຮຽບຮຽງໂດຍ: ກະເດົາ



ນໍ້າເຜິ້ງ ອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫຼະ ເຊິ່ງເປັນໂຕການສຳຄັນໃນການຕໍ່ສູ້ກັບໂຣກໄພໄຂ້ເຈັບ ແລະ ຊ່ວຍຫຼຸດຂະບວນການອັກເສບທີ່ເກີດຂຶ້ນໃນຮ່າງກາຍໄດ້; ນອກຈາກນີ້, ຍັງມີງານວິໄຈລະບຸວ່າ ສານຕ້ານອະນຸມູນອິດສະຫຼະທີ່ມີຢູ່ໃນນໍ້າເຜິ້ງ ມີສ່ວນໃນການປ້ອງກັນໂຣກຫົວໃຈ, ໂຣກມະເຮັງແລະພະຍາດຕ່າງໆອີກດ້ວຍ.

ນໍ້າເຜິ້ງ ຊ່ວຍເຮັດໃຫ້ບາດແຜເຊົາໄວ: ເພາະນໍ້າເຜິ້ງອອກລິດຄ້າຍຄືຢາຕ້ານເຊື້ອ ຊ່ວຍໃຫ້ບາດແຜບໍ່ຕິດເຊື້ອແລະເຊົາໄດ້ໄວຂຶ້ນ; ນອກຈາກນີ້, ນໍ້າເຜິ້ງຍັງສາມາດນຳໄປໃຊ້ໃນການຮັກສາໂຣກຜິວໜັງຕ່າງໆໄດ້ຢ່າງໜ້າອັດສະຈັນ.

ນໍ້າເຜິ້ງເປັນວິທີທຳມະຊາດຢ່າງໜຶ່ງທີ່ຮັກສາອາການໄອ ເຈັບຄໍໄດ້ເປັນຢ່າງດີ ໂດຍການຈິບນໍ້າເຜິ້ງປະສົມນໍ້າໝາກນາວ ຫຼື ຊົງນໍ້າເຜິ້ງກັບນໍ້າອຸ່ນ ເພື່ອຊ່ວຍເຮັດໃຫ້ລຳຄໍຊຸ່ມຊື່ນ, ຫຼຸດອາການໄອ ແລະ ບັນເທົາອາການເຈັບຄໍ ຫຼື ຄັນຄໍໄດ້ເປັນຢ່າງດີ.

ນໍ້າເຜິ້ງຍັງຊ່ວຍລະບົບການຂັບຖ່າຍ, ຫຼຸດອາການຖອກທ້ອງຊ່ວຍເສີມສ້າງການຜະລິດເມືອກພາຍໃນລຳໄສ້ ເຮັດໃຫ້ຂັບຖ່າຍໄດ້ດີຂຶ້ນ ເພາະໃນນໍ້າເຜິ້ງມີສ່ວນປະສົມທີ່ເປັນເອນໄຊຊ່ວຍຍ່ອຍອາຫານກຸ່ມຄາໂບໄຮເດດໄດ້ດີ.

ນໍ້າເຜິ້ງສາມາດແກ້ອາການນອນບໍ່ຫຼັບ: ເພາະໃນນໍ້າເຜິ້ງມີກົດທີ່ມີຊື່ວ່າ ກົດເດຄາໂນອິກ ເຊິ່ງເປັນກົດໄຂມັນອີ່ມຕົວ (DecanoicAcid) ກົດນີ້ມີຄຸນສົມບັດໃນການຄາຍຄຽດ ເຮັດໃຫ້ທ່ານຮູ້ສຶກຜ່ອນຄາຍ ຊ່ວຍໃນການນອນຫຼັບໄດ້ງ່າຍ; ດັ່ງນັ້ນ, ຫາກທ່ານກຳລັງປະສົບບັນຫານອນຫຼັບຍາກຫຼືນອນບໍ່ຫຼັບ ລອງດື່ມນໍ້າເຜິ້ງໃນກ່ອນເຂົ້ານອນ ແລ້ວທ່ານຈະນອນຫຼັບພັກຜ່ອນໄດ້ຢ່າງເຕັມທີ່ແນ່ນອນ.

**ຂໍ້ຄວນລະວັງໃນການໃຊ້ນໍ້າເຜິ້ງ**

ບໍ່ຄວນໃຫ້ເດັກນ້ອຍອາຍຸຕໍ່າກວ່າ 1 ປີກິນນໍ້າເຜິ້ງ ເນື່ອງຈາກນໍ້າເຜິ້ງມີທັງເອນໄຊ ແລະ ນໍ້າລາຍຈາກໂຕເຜິ້ງ ເດັກນ້ອຍອາດມີພູມຄຸ້ມກັນບໍ່ພຽງພໍຈົນເຮັດໃຫ້ເກີດອາການຮາກ ຫຼື ຖອກທ້ອງໄດ້.

ບໍ່ຄວນບໍລິໂພກນໍ້າເຜິ້ງເກີນ 10 ບ່ວງກາເຟຕໍ່ມື້ ເພາະຢ່າລືມວ່ານໍ້າເຜິ້ງຍັງເປັນນໍ້າຕານຊະນິດໜຶ່ງ ເຊິ່ງອາດຈະເຮັດໃຫ້ລະດັບນໍ້າຕານໃນເລືອດເພີ່ມສູງຂຶ້ນ ໂດຍສະເພາະຜູ້ທີ່ເປັນໂລກເບົາຫວານຢູ່ແລ້ວ.

**ຂໍ້ມູນຈາກ:**
**www.lnr.org.la**

ອາດ ກະວີລາວ

# ໂຊກດີປີໃໝ່

**# ທິດາ ອິງແກ້ວ**

✻ ປີເກົ່າລາຍ່າງຍ້າຍ
ອໍຍື່ນຍໍກອາຍພອນ
ນ້ອມຍື່ນຍໍຜູ້ນຳກ້າ
ສົມປະສົງມ່ອນແມ້ງ

ປີໃໝ່ປ່ຽນວຽນພູນ
ໂຊກໂຊມາໄລພ້ອມ
ປວງປະຊາພ້ອມຜ່ຳ
ພະໄມມຸ້ງຄິດໝາຍ

✻ ປີໃໝ່ມາຮອດແລ້ວ
ທຸກຢ່າມີມາພານ
ເປັນເສດຖີເງິນລ້ານ
ຢ່າມີອັບແກ່ເກົ້າ

ອໍໃຫ້ທ່ານປະສົບສຸກ
ຜ່ານກາຍໄກເວັ້ນ
ບໍລິວານແຫນແຫ່
ຜອງເທົ້າຊົ່ວນິລັນ ພຸ້ນຫອນ!

✻ 1 ມັງກອນກອດກ້ຽວ
ເງິນຄຳທັງເຜັດພອຍ
ຄວາມສຸກໄຫຼມາເຂົ້າ
ທຸກຢ່າພານມໍໃກ້

ໂຊກໃຫຍ່ໄຊງາມ
ຫຼັ່ງໄຫຼໂຮມເຕົ້າ
ບັນຈົງເກີດກັບທ່ານ
ໄກເວັ້ນຫ່າງຫາຍ

✻ ອໍໃຫ້ລອຍລາບລົ້ນ
ວັນນະຂາວນວນໃສ
ປາກຸະໜາໃດນັ້ນ
ເງິນຄຳໄຫຼຫຼັ່ງເຂົ້າ

ອາຍຸຈົ່ງຍືນຍາວ
ເທື່ອແຮງແຂງເຂັ້ມ
ສົມຫວັງມະໂນນຶກ
ໂຮມເຈົ້າຕະຫຼອດປີ

✻ ພອນນີ້ຂຽນຈາກຫ້ອງ
ໜັງສືພິມຜູ້ແທນລາວ
ອໍໃຫ້ຫຼານເຫຼັນຫຼ້ອນ
ຜູ້ນຳລາວພ່ຳພ້ອມ

ຫົວໃຈຄົບສົ່ມວນຊົນ
ຂ່າວການເມືອງບ້ານ
ປະຊາລາວທຸກຊົນເຜົ່າ
ຍືນພັ້ນຊົ່ວນິລັນ



## ຫັກຫາຍລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

✻ **ຊົມ**ເຊີຍຜົນສຳເລັດກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ມີຄະແຫຼງຂ່າວແຈ້ງ ບອກກ່າວເປັນທາງການ ລາຍງານຜົນສຳເລັດ ທົ່ວໂລກກ້ອງຊ່ກ່າວຍ່ຍົກຍ້ອງ ຊົມເຊີຍຜູ້ແທນໃໝ່ແສນດີໃຈຊື່ນຊ້ອຍ ປະຊາລາວໃຫຍ່ນ້ອຍ ກຽມພ້ອມໄຕ່ຕາມ **ທ່ານເອີຍ!**

✻ **ປີ**ເກົ່າຜ່ານໄປປີໃໝ່ວຽນມາ ຫລັງອ່ຳພົງພີ່ນ້ອງ ເພື່ອນມິດແຟນຄໍລຳ ຂອງ ຫັກຫາຍລະບາຍໃຈ ສ່ອງພະໄທສະບາຍເບື້ອໄປທ່ຽວເໜືອກາງໃຕ້ ສົມໃຈໃນວັນພັກ ຊ່ໃຫ້ລອຍລາບລົ້ນ ແຂງແຮງພ້ອມຄູ່ສູ່ຄົບ **ທຸກທ່ານເນີ!**

## ຊວນຍິ້ມ

# ພົ້ງດຶ່ງ

### ເລື່ອງ: ໄມໃໝ່ໄໝ້

ໃໝ່ກັບໄໝເປັນໝູ່ກັນ; ໃໝ່ມີອາຊີບເປັນນັກຮ້ອງໃນຮ້ານອາຫານທີ່ໄໝເປັນເຈົ້າຂອງ; ມື້ໜຶ່ງ, ຮ້ານອາຫານເກີດໄຟໄໝ້, ໃໝ່ຈຶ່ງໂທຫາໄໝ ເພາະຄວາມເປັນຫ່ວງໃນຊັບສິນຕ່າງໆຂອງຕົນ ໂດຍສະເພາະແມ່ນໄມໃໝ່ທີ່ຫາກໍ່ຊື້ມາໃນລາຄາຫຼາຍລ້ານ... ຈຶ່ງຖາມວ່າ:

"ໄມໃໝ່ ໃໝ່ ໄໝ້ບໍ່ໄໝ"

**ໄໝ:** "ແມ່ນຫຍັງຂອງມຶງ... ເປັນບ້າຫວາ ມາເຜີນສຽງອັບນະຍຸດໃຫ້ກູຟັງເຮັດຫຍັງ"



## ສຸພາສິດ-ຄະຕິເຕືອນໃຈ

#ດອກຫຍ້າ

ຄັນເຈົ້າໄດ້ກັ້ງ ບັ່ງຮົ່ມເປັນພະຍາ
ຢ່າໄດ້ລືມເສນາ ຜູ້ແທ່ແທນບ່າກົ້ນ

## ລັດຖະສະພາຕ່າງປະເທດ

# ປິດກອງປະຊຸມຄະນະປະຈຳ NPC ສະໄໝທີ 19




(Xinhua) - ວັນເສົາທີ 27 ທັນວາຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 19 ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ ປະທານຄະນະປະຈຳ NPC. ກອງປະຊຸມໄດ້ລົງມະຕິຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງຄວາມປອດໄພຂອງສານເຄມີອັນຕະລາຍ;ການປັບປຸງກົດໝາຍການປະມົງ, ກົດໝາຍການບິນພົນລະເຮືອນ,ກົດໝາຍວ່າດ້ວຍພາສາຈີນມາດຕະຖານທັງການເວົ້າ ແລະ ການຂຽນ, ກົດໝາຍການຄ້າຕ່າງປະເທດ ພ້ອມທັງຕົກລົງຮັບຮອງເອົາບົດລາຍງານຂອງຄະນະກຳມະການນິຕິບັນຍັດຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ວ່າດ້ວຍຄວາມຄືບໜ້າຂອງການກວດກາຄືນກົດໝາຍ ແລະ ກຳຈັດການເຮັດຜິດກົດໝາຍ ແລະ ມາດຕະການຈັດການທີ່ກ່ຽວຂ້ອງ.

ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດ 6 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ມະຕິດັ່ງກ່າວ.

ກອງປະຊຸມມີມະຕິໃຫ້ສະເໜີຮ່າງປະມວນກົດໝາຍສິ່ງແວດລ້ອມ, ຮ່າງກົດໝາຍວ່າດ້ວຍການສົ່ງເສີມຄວາມສາມັກຄີແລະຄວາມກ້າວໜ້າຂອງບັນດາເຜົ່າ, ແລະ ຮ່າງກົດໝາຍວ່າດ້ວຍການວາງແຜນພັດທະນາແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ NPC ຊຸດທີXIV ເພື່ອພິຈາລະນາເພີ່ມຕື່ມ ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 4 ຈະໄຂຂຶ້ນໃນວັນທີ 5 ມີນາ 2026.

ກອງປະຊຸມຍັງໄດ້ລົງຄະແນນສຽງຮັບຮອງເອົາການຕີຄວາມໝາຍຂອງຄະນະປະຈຳ NPC ໃນມາດຕາ 292 ຂອງກົດໝາຍການດຳເນີນຄະດີອາຍາ, ບົດລາຍງານກ່ຽວກັບການກວດກາຂໍ້ສະເໜີຂອງສະມາຊິກສະພາແລະກ່ຽວກັບຄຸນສົມບັດຂອງສະມາຊິກສະພາຈຳນວນໜຶ່ງ ແລະ ຮ່າງກົດໝາຍອື່ນໆທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວປິດກອງປະຊຸມ, ຈ້າວ ໄດ້ຮຽກຮ້ອງໃຫ້ມີການກະກຽມ ແລະ ການຈັດຕັ້ງຢ່າງລະອຽດຮອບຄອບສຳລັບກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຊຸດທີ XIV ທີ່ກຳລັງຈະມາເຖິງທັງຮຽກຮ້ອງໃຫ້ບັນດາສະມາຊິກສະພາ ກະກຽມ ແລະ ວາງແຜນການເຮັດວຽກຂອງຕົນໃນປີໜ້າຢ່າງລະອຽດຖີ່ຖ້ວນ ໂດຍສອດຄ່ອງກັບວຽກງານສຳຄັນຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນປະຈຳປີ2026ເປັນຕົ້ນແມ່ນວຽກງານນິຕິບັນຍັດ, ການຕິດຕາມກວດກາ, ການເປັນຕົວແທນ ແລະ ການຕ່າງປະເທດ.

ກົດໝາຍວ່າດ້ວຍການຄຸ້ມຄອງຄວາມປອດໄພຂອງສານເຄມີອັນຕະລາຍ ຈະມີຜົນບັງຄັບໃຊ້ໃນວັນທີ 1 ພຶດສະພາ 2026 ລວມມີ 10 ໝວດກວມເອົາການຄວບຄຸມທົ່ວວົງຈອນຊີວິດທັງໝົດຂອງສານເຄມີອັນຕະລາຍຕັ້ງແຕ່ການຜະລິດ,ການເກັບຮັກສາ, ການນຳໃຊ້, ການດຳເນີນທຸລະກິດ, ການຂົນສົ່ງ ແລະ ການຕອບໂຕ້ຕໍ່ເຫດສຸກເສີນ; ກົດໝາຍສະບັບໃໝ່ນີ້ ມີຈຸດປະສົງເພື່ອເພີ່ມທະວີການຄຸ້ມຄອງຄວາມປອດໄພຂອງສານເຄມີທີ່ເປັນອັນຕະລາຍ, ປ້ອງກັນ ແລະ ຫຼຸດຜ່ອນອຸບັດເຫດທີ່ກ່ຽວຂ້ອງ,ປົກປ້ອງສາສຸຂະພາບແລະຊັບສິນຂອງປະຊາຊົນ ແລະ ປົກປັກຮັກສາສິ່ງແວດລ້ອມທາງນິເວດວິທະຍາ.

ກົດໝາຍການປະມົງ ຈະມີຜົນບັງຄັບໃຊ້ໃນວັນທີ 1 ພຶດສະພາ 2026; ການປັບປຸງຄັ້ງນີ້ ໄດ້ເນັ້ນໜັກເຖິງຂໍ້ກຳນົດກ່ຽວກັບການສົ່ງເສີມ ແລະ ຄວບຄຸມການລ້ຽງສັນໃນນ້ຳ, ການຄຸ້ມຄອງການປະມົງທີ່ເຂັ້ມງວດຂຶ້ນ, ປົກປັກຮັກສາຊັບພະຍາກອນການປະມົງໃຫ້ດີຍິ່ງຂຶ້ນ, ເພີ່ມທະວີການກວດກາ ແລະ ບໍລິຫານການປະມົງທີ່ເຂັ້ມແຂງຂຶ້ນ. ກົດໝາຍລະບຸວ່າ: ຈີນ ຈະຊຸກຍູ້ໃຫ້ອົງການຈັດຕັ້ງ ແລະ ບຸກຄົນ ໃຊ້ປະໂຫຍດຈາກນ່ານນ້ຳ ແລະ ຮາບພຽງນ້ຳຂຶ້ນນ້ຳລົງ (tidal flats) ທີ່ເໝາະສົມ ເພື່ອການພັດທະນາການລ້ຽງສັນໃນນ້ຳຕາມຫຼັກເປັນວິທະຍາສາດ; ສະໜັບສະໜູນແນວທາງການເຮັດຟາມທີ່ປະຢັດຊັບພະຍາກອນ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ຮັບປະກັນຄຸນນະພາບ;ກ່ຽວກັບການປົກປັກຮັກສາຊັບພະຍາກອນການປະມົງ, ຈີນ ຈະເພີ່ມທະວີການເກັບກຳແລະອະນຸລັກຊັບພະຍາກອນພັນທຸກຳສັດນ້ຳໃຫ້ດີຍິ່ງຂຶ້ນພ້ອມທັງຫ້າມເຄື່ອນໄຫວຫາປາໃນເຂດຫ້າມປະມົງ. ກົດໝາຍການປະມົງໃນປັດຈຸບັນ ມີຜົນບັງຄັບໃຊ້ໃນປີ 1986.

ກົດໝາຍການບິນພົນລະເຮືອນສະບັບປັບປຸງ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2026 ລວມມີ 16 ໝວດ ເຊິ່ງຊ່ວຍເສີມຂະຫຍາຍ ແລະ ປັບປຸງບັນດາມາດຕະການດ້ານສະຖາບັນໃຫ້ດີຍິ່ງຂຶ້ນ ເພື່ອຄວບຄຸມກິດຈະກຳການບິນພົນລະເຮືອນ, ຮັບປະກັນຄວາມປອດໄພຂອງການບິນພົນລະເຮືອນ; ສະໜັບສະໜູນການພັດທະນາການຜະລິດ, ການຂົນສົ່ງ ແລະ ເສດຖະກິດລະດັບຕ່ຳຂອງການບິນພົນລະເຮືອນ; ເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງຍານພາຫະນະທາງອາກາດທີ່ບໍ່ມີຄົນຂັບ (unmanned aerial vehicles - UAVs) ພົນລະເຮືອນ, ໄດ້ກຳນົດໃຫ້ໜ່ວຍງານທີ່ມີສ່ວນຮ່ວມໃນການອອກແບບ, ຜະລິດ, ນຳເຂົ້າ, ບຳລຸງຮັກສາ ແລະ ນຳໃຊ້ UAVs ພົນລະເຮືອນ ຕ້ອງຍື່ນຄຳຮ້ອງຂໍໃບຢັ້ງຢືນຄວາມເໝາະສົມດ້ານການບິນຈາກໜ່ວຍງານທີ່ກ່ຽວຂ້ອງຕາມລະບຽບການແຫ່ງຊາດ, ຍົກເວັ້ນໃນກໍລະນີທີ່ບໍ່ຈຳເປັນຕ້ອງມີໃບຢັ້ງຢືນຄວາມເໝາະສົມດ້ານການບິນ. ເພື່ອເພີ່ມຄວາມປອດໄພໃນການບິນພົນລະເຮືອນໃຫ້ດີຍິ່ງຂຶ້ນ, ໄດ້ຫ້າມໃຊ້ອຸປະກອນເລເຊີ ທີ່ອາດຈະສົ່ງຜົນກະທົບຕໍ່ການເຮັດວຽກຂອງເຄື່ອງຊ່ວຍນຳທາງດ້ວຍພາບຢູ່ສະໜາມບິນ ແລະ ລະບຸລາຍການສະເພາະຂອງການກະທຳທີ່ຕ້ອງຫ້າມ ເຊິ່ງອາດຈະລົບກວນສະພາບແວດລ້ອມທາງແມ່ເຫຼັກໄຟຟ້າຂອງສະໜາມບິນ.

ກົດໝາຍວ່າດ້ວຍພາສາຈີນມາດຕະຖານ ທັງການເວົ້າ ແລະ ການຂຽນ ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2026 ໂດຍກຳນົດໃຫ້ອາທິດທີ3ຂອງເດືອນກັນຍາຂອງທຸກປີ ເປັນອາທິດປະຊາສຳພັນເພື່ອສົ່ງເສີມ ແລະ ເຜີຍແຜ່ພາສາຈີນມາດຕະຖານ ທັງການເວົ້າ ແລະ ການຂຽນ. ກົດໝາຍສະບັບປັບປຸງໄດ້ກຳນົດວ່າ ງານວາງສະແດງ, ກອງປະຊຸມແລະກິດຈະກຳອື່ນໆໃນລະດັບນານາຊາດ ທີ່ຈັດຂຶ້ນໃນປະເທດຈີນ ເຊິ່ງໃຊ້ພາສາຕ່າງປະເທດສຳລັບປ້າຍ, ການໝາຍ ຫຼື ສື່ປະຊາສຳພັນ ຈະຕ້ອງມີພາສາຈີນມາດຕະຖານລວມຢູ່ດ້ວຍ; ນອກຈາກນີ້, ຍັງລະບຸວ່າ ການສຶກສາພາສາຈີນໃນລະດັບນານາຊາດ ຄວນສຸມໃສ່ການສອນພາສາຈີນມາດຕະຖານແລະຍັງກຳນົດໃຫ້ສິ່ງພິມອອນລາຍລວມທັງເກມອອນລາຍ ຕ້ອງໃຊ້ພາສາຈີນມາດຕະຖານເປັນຮູບແບບພື້ນຖານຂອງການສະແດງອອກ ເພື່ອຄວບຄຸມການນຳໃຊ້ພາສາຈີນມາດຕະຖານໃນໂລກໄຊເບີໃຫ້ດີຍິ່ງຂຶ້ນ. ກົດໝາຍພາສາທີ່ມີຜົນບັງຄັບໃຊ້ໃນປີ 2001 ໄດ້ກຳນົດພາສາຈີນກາງແລະຕົວອັກສອນຈີນມາດຕະຖານ ເປັນຮູບແບບມາດຕະຖານຂອງພາສາຈີນທັງໃນການເວົ້າ ແລະ ການຂຽນ ແລະ ເປັນພາສາທາງການຂອງຈີນ. ປັດຈຸບັນ, ປະຊາກອນທົ່ວປະເທດຫຼາຍກວ່າ80%ສາມາດສື່ສານດ້ວຍພາສາຈີນກາງ ແລະ ອັດຕາການຮູ້ໜັງສືຂອງປະເທດ ສູງກວ່າ 97%.

ກົດໝາຍການຄ້າຕ່າງປະເທດ ຈະມີຜົນບັງຄັບໃຊ້ໃນວັນທີ 1 ມີນາ 2026 ລວມມີ 11 ໝວດ ໄດ້ລວມເອົາບົດບັນຍັດກ່ຽວກັບການປົກປັກຮັກສາອະທິປະໄຕ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດດ້ານການພັດທະນາຂອງຊາດພ້ອມທັງເນັ້ນໜັກວ່າ, ການຄ້າຕ່າງປະເທດຂອງຈີນ ຈະຕ້ອງຮັບໃຊ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ໃນການປະຕິບັດມາດຕະການປະຕິຮູບທີ່ກ່ຽວຂ້ອງ, ການປັບປຸງຄັ້ງນີ້ ໄດ້ເພີ່ມບົດບັນຍັດກ່ຽວກັບການສົ່ງເສີມຄວາມພະຍາຍາມຂອງຈີນ ໃນການປັບຕົວໃຫ້ສອດຄ່ອງກັບລະບຽບການທາງເສດຖະກິດ ແລະ ການຄ້າສາກົນທີ່ມີມາດຕະຖານສູງ ແລະ ການມີສ່ວນຮ່ວມໃນການກຳນົດກົດ ວັນທີ 1 ມີນາ 2026. ວ່າ 97%.ລະບຽບທາງເສດຖະກິດ ແລະ ການຄ້າສາກົນ. ເພື່ອປັບປຸງສະພາບແວດລ້ອມການພັດທະນາການຄ້າຕ່າງປະເທດໃຫ້ດີຍິ່ງຂຶ້ນ,ກົດໝາຍໄດ້ຊີ້ແຈ້ງຢ່າງຊັດເຈນວ່າ, ຈີນ ຈະສ້າງຄວາມເຂັ້ມແຂງການປົກປ້ອງຊັບສິນທາງປັນຍາທີ່ກ່ຽວ ຂ້ອງເຖິງການຄ້າຕ່າງປະເທດ,ເພີ່ມທະວີຄວາມສາມາດໃນການປະຕິບັດຕາມກົດລະບຽບ ແລະ ການຕອບໂຕ້ກັບຄວາມສ່ຽງຂອງຜູ້ປະກອບການການຄ້າຕ່າງປະເທດ ກ່ຽວກັບສິດໃນຊັບສິນທາງປັນຍາ; ການປັບປຸງຄັ້ງນີ້ ຍັງຊ່ວຍເສີມຂະຫຍາຍ ແລະ ປັບປຸງເຄື່ອງມືທາງກົດໝາຍຂອງຈີນ ໃນການຕໍ່ສູ້ໃນເວທີການຄ້າຕ່າງປະເທດ, ເພີ່ມຕື່ມ ແລະ ປັບປຸງມາດຕະການຕອບໂຕ້ທີ່ກ່ຽວຂ້ອງໃຫ້ດີຍິ່ງຂຶ້ນ. ກົດໝາຍການຄ້າຕ່າງປະເທດຂອງຈີນ ມີຜົນບັງຄັບໃຊ້ໃນປີ 1994 ແລະ ໄດ້ຮັບການປັບປຸງຄັ້ງທຳອິດໃນປີ2004.

ການຈັດທຳປະມວນກົດໝາຍສິ່ງແວດລ້ອມ ແມ່ນມະຕິສຳຄັນຂອງຄະນະບໍລິຫານງານສູນກາງພັກກອມມູນິດຈີນ ແລະ ມີຄວາມໝາຍຄວາມສຳຄັນຢ່າງເລິກເຊິ່ງ ແລະ ກວ້າງຂວາງ ຕໍ່ການສົ່ງເສີມໂຄງການລິເລີ່ມ “ຈີນທີ່ສວຍງາມ” ໃນທຸກດ້ານ ແລະ ສົ່ງເສີມຄວາມກົມກຽວລະຫວ່າງມະນຸດຊາດກັບທຳມະຊາດ; ເມື່ອປະກາດໃຊ້, ປະມວນກົດໝາຍສິ່ງແວດລ້ອມ ຈະກາຍເປັນປະມວນກົດໝາຍສະບັບທີສອງຢ່າງເປັນທາງການຂອງຈີນ ຖັດຈາກປະມວນກົດໝາຍແພ່ງ ທີ່ປະກາດໃຊ້ໃນປີ 2020, ການຈັດທຳປະມວນກົດໝາຍສິ່ງແວດລ້ອມ ໄດ້ເລີ່ມຂຶ້ນໃນປີ 2023.

ຮ່າງກົດໝາຍວ່າດ້ວຍການສົ່ງເສີມຄວາມສາມັກຄີແລະຄວາມກ້າວໜ້າຂອງບັນດາເຜົ່າ ໄດ້ສະຫຼຸບ ແລະ ສ່ອງແສງໃຫ້ເຫັນເຖິງບັນດາຜົນງານແລະປະສົບການທາງປະຫວັດສາດທີ່ຍາດມາໄດ້ໃນວຽກງານຊົນເຜົ່າຂອງພັກໃນຍຸກໃໝ່; ຮ່າງກົດໝາຍສະບັບນີ້ ໄດ້ຊີ້ບອກເຖິງຄວາມຕ້ອງການໂດຍລວມ, ຫຼັກການສຳຄັນແລະຄວາມຮັບຜິດຊອບຂອງຝ່າຍທີ່ກ່ຽວ ຂ້ອງ, ແລະ ເປັນພື້ນຖານທາງກົດໝາຍທີ່ໜັກແໜ້ນ ເພື່ອສົ່ງເສີມຄວາມຮູ້ສຶກເປັນສ່ວນໜຶ່ງຂອງຊຸມຊົນທີ່ເຂັ້ມແຂງຂອງຊາດຈີນ ແລະ ພັດທະນາການສ້າງຊຸມຊົນດັ່ງກ່າວ.

ກົດໝາຍວ່າດ້ວຍການວາງແຜນພັດທະນາແຫ່ງຊາດ ມີຈຸດປະສົງເພື່ອເປັນກົດໝາຍພື້ນຖານໃນການກຳນົດການສ້າງແຜນພັດທະນາແຫ່ງຊາດ ແລະ ຮັບປະກັນການຈັດຕັ້ງປະຕິບັດ; ໂດຍຜ່ານປະສົບການທີ່ປະສົບຜົນສຳເລັດຂອງການວາງແຜນພັດທະນາແຫ່ງຊາດ, ຮ່າງກົດໝາຍສະບັບນີ້ໄດ້ກຳນົດລະບຽບການໃນການສ້າງ, ການພິຈາລະນາ ແລະ ອະນຸມັດ, ການຈັດຕັ້ງປະຕິບັດ, ແລະ ການຕິດຕາມກວດກາແຜນການດັ່ງກ່າວເຊິ່ງເປັນການສະໜັບສະໜູນທາງກົດໝາຍທີ່ເຂັ້ມແຂງຍິ່ງຂຶ້ນໃນການວາງແຜນພັດທະນາປະເທດ.



# ລັດຖະບານມາເລເຊຍ ຈະຍື່ນຮ່າງກົດໝາຍ ຈຳກັດອາຍຸການນາຍົກລັດຖະມົນຕີ



(CNA)-ນາຍົກລັດຖະມົນຕີມາເລເຊຍ ອັນວາ ອິບຣາຮິມ (Anwar Ibrahim) ກຽມຍື່ນຮ່າງກົດໝາຍເພື່ອຈຳກັດວາລະດຳລົງຕຳແໜ່ງຜູ້ນຳປະເທດ ສູງສຸດສອງສະໄໝ ຫຼື ບໍ່ເກີນ 10 ປີ ພ້ອມກັບຍົກລະດັບການປົກຄອງທີ່ດີ, ສະເໜີຮ່າງກົດໝາຍເສລີພາບຂໍ້ມູນຂ່າວສານ ແລະ ສ້າງຕັ້ງອົງການກວດສອບແຫ່ງລັດ.

ວັນທີ 5 ມັງກອນຜ່ານມາ, ໃນການຖະແຫຼງຕໍ່ຄະນະລັດຖະມົນຕີ ແລະ ພະນັກງານ-ລັດຖະກອນ ຫຼັງຈາກກອງປະຊຸມຄະນະລັດຖະມົນຕີ, ນາຍົກລັດຖະມົນຕີ ອັນວາ ອິບຣາຮິມ ໄດ້ກ່າວເຖິງບັນຫາການຍຶດຕິດກັບອຳນາດ ແລະ ຢ້ຳເຕືອນໃຫ້ທຸກຄົນລະລຶກວ່າ "ທຸກຄົນມີວາລະດຳລົງຕຳແໜ່ງທີ່ຈຳກັດ" ໂດຍບໍ່ມີຂໍ້ຍົກເວັ້ນ; ເຂົາກ່າວວ່າ ລັດຖະບານມີແຜນຈະສະເໜີຮ່າງກົດໝາຍເພື່ອຈຳກັດວາລະຂອງຜູ້ດຳລົງຕຳແໜ່ງນາຍົກລັດຖະມົນຕີ "ໂດຍຈະຕ້ອງບໍ່ເກີນ 10 ປີ ຫຼື ສອງສະໄໝເຕັມ" ພ້ອມກ່າວຕື່ມວ່າ ເມື່ອບຸກຄົນນັ້ນດຳລົງຕຳແໜ່ງຄົບວາລະແລ້ວ "ເປັນການດີກວ່າຫາກຈະສົ່ງຕໍ່ໜ້າທີ່ໃຫ້ແກ່ຄົນຮຸ່ນຕໍ່ໄປ".

ປັດຈຸບັນ, ລັດຖະທຳມະນູນມາເລເຊຍບໍ່ໄດ້ຈຳກັດວາລະການດຳລົງຕຳແໜ່ງນາຍົກລັດຖະມົນຕີ. ໃນອະດີດ, ດຣ. ມະຫາເທຍ ໂມຮາມັດ (Mahathir Mohamad) ເຄີຍດຳລົງຕຳແໜ່ງນາຍົກລັດຖະມົນຕີ ເປັນເວລາເຖິງ 22 ປີ, ນັບແຕ່ການບໍລິຫານປະເທດສະໄໝທຳອິດ ຈົນລາອອກຈາກຕຳແໜ່ງເມື່ອປີ 2003; ຢ່າງໃດກໍຕາມ, ມະຫາເທຍ ໄດ້ຕັດສິນໃຈກັບຄືນສູ່ການເມືອງ ເພື່ອເປັນຜູ້ນຳກຸ່ມພັນທະມິດຝ່າຍຊ້າຍ ທີ່ໂຄ່ນລົ້ມລັດຖະບານທີ່ມີການສໍ້ລາດບັງຫຼວງຂອງ ນາຈິບ ຣາຊັກ (Najib Razak) ໃນການເລືອກຕັ້ງປີ 2018 ແລະ ສາບານຕົນເຂົ້າຮັບຕຳແໜ່ງຜູ້ນຳມາເລເຊຍອີກຄັ້ງຕອນອາຍຸ 92 ປີ, ສ້າງປະຫວັດສາດເປັນນາຍົກລັດຖະມົນຕີຜູ້ມີອາຍຸສູງທີ່ສຸດໃນໂລກ ແລະ ຍັງຢູ່ໃນຕຳແໜ່ງໃນເວລານັ້ນ.

ເຖິງແນວໃດກໍຕາມ, ອັນວາຍັງບໍ່ທັນໄດ້ກຳນົດວັນເວລາທີ່ແນ່ນອນສຳລັບການຍື່ນຮ່າງກົດໝາຍດັ່ງກ່າວ, ຂະນະທີ່ລັດຖະສະພາມີກຳນົດຈະເປີດກອງປະຊຸມສະໄໝທຳອິດຂອງປີນີ້ພາຍໃນເດືອນມັງກອນ; ທັງນີ້, ກຸ່ມພັນທະມິດປາກາຕັນ ຮາຣາປັນ (Pakatan Harapan) ຂອງອັນວາ ໄດ້ສັນຍາໄວ້ໃນຖະແຫຼງການນະໂຍບາຍການເລືອກຕັ້ງປີ 2022 ວ່າຈະຈຳກັດໄລຍະເວລາການດຳລົງຕຳແໜ່ງນາຍົກລັດຖະມົນຕີໄວ້ພຽງສອງວາລະ.

ຂະນະດຽວກັນ, ອັນວາຍັງປະກາດດ້ວຍວ່າລັດຖະບານຈະຍື່ນກົດໝາຍເສລີພາບໃນການຮັບຮູ້ຂໍ້ມູນຂ່າວສານຕໍ່ລັດຖະສະພາພ້ອມກັບຮ່າງກົດໝາຍສ້າງຕັ້ງອົງການກວດສອບແຫ່ງລັດ ເພື່ອສ້າງຄວາມເຂັ້ມແຂງໃນການຕໍ່ຕ້ານການສໍ້ລາດບັງຫຼວງ; ຜູ້ນຳມາເລເຊຍຢືນຢັນວ່າ ການມີອົງການດັ່ງກ່າວ ຈະເປີດໂອກາດໃຫ້ປະຊາຊົນສາມາດຕັ້ງຄຳຖາມຕໍ່ບັນຫາຕ່າງໆໄດ້ເພາະທຸກຄົນຕັ້ງແຕ່ນາຍົກລັດຖະມົນຕີລົງມາ ຈະຕ້ອງມີຄວາມຮັບຜິດຊອບ ແລະ ພ້ອມທີ່ຈະຖືກກວດສອບໂດຍບໍ່ມີຂໍ້ຍົກເວັ້ນ.

# ຫວຽດນາມ ລົງໂທດເຂັ້ມງວດຂຶ້ນ ສຳລັບການໃຊ້ຢາສູບໄຟຟ້າ



(Straitstimes) - ຫວຽດນາມ ເລີ່ມໃຊ້ກົດໝາຍໃໝ່ທີ່ກຳນົດໂທດຄ່າປັບໃໝສູງສຸດປະມານ 3-5 ລ້ານດົງ ສຳລັບຜູ້ສູບຢາສູບໄຟຟ້າ, ເຈົ້າໜ້າທີ່ຍັງມີອຳນາດໃນການຢຶດແລະທຳລາຍອຸປະກອນໄດ້ທັນທີ ພ້ອມທັງມີການລົງໂທດເຈົ້າຂອງສະຖານທີ່ ແລະ ນິຕິບຸກຄົນ ຫາກປ່ອຍປະລະເລີຍໃຫ້ມີການສູບຢາສູບໄຟຟ້າໃນສະຖານທີ່ຂອງຕົນ.

ເວັບໄຊຈົດໝາຍເຫດທາງລັດຖະການຂອງຫວຽດນາມ ປະກາດການເລີ່ມບັງຄັບໃຊ້ດຳລັດສະບັບເລກທີ 371 ຕັ້ງແຕ່ວັນທີ 31 ທັນວາ 2025 ໂດຍລະບຸວ່າ ຜູ້ໃຊ້ຢາສູບໄຟຟ້າ ຫຼື ຜະລິດຕະພັນຢາສູບທີ່ໃຊ້ຄວາມຮ້ອນ ຈະປະເຊີນກັບຄ່າປັບໃໝຕັ້ງແຕ່ 3-5 ລ້ານດົງ; ນອກຈາກນີ້, ເຈົ້າໜ້າທີ່ຍັງມີອຳນາດໃນການຢຶດແລະທຳລາຍຜະລິດຕະພັນດັ່ງ ກ່າວອີກດ້ວຍ. ຂະນະດຽວກັນ, ມາດຕະການຍັງຂະຫຍາຍຂອບເຂດການບັງຄັບໃຊ້ໄປເຖິງກຸ່ມບຸກຄົນທີ່ໃຫ້ພື້ນທີ່ສຳລັບກິດຈະກຳດັ່ງກ່າວ ໂດຍລະບຸວ່າ ຜູ້ໃດກໍຕາມທີ່ພົບເຫັນວ່າໃຫ້ທີ່ພັກອາໄສ ຫຼື ອະນຸຍາດໃຫ້ຄົນອື່ນໃຊ້ຢາສູບໄຟຟ້າ ຫຼື ຢາສູບທີ່ໃຊ້ຄວາມຮ້ອນ ໃນສະຖານທີ່ເຊິ່ງຢູ່ພາຍໃຕ້ການເປັນເຈົ້າຂອງ ຫຼື ການຄຸ້ມຄອງຂອງຕົນ ຈະປະເຊີນກັບການປັບໃໝຕັ້ງແຕ່ 5-10 ລ້ານດົງ; ໂທດປັບໃໝດັ່ງກ່າວ ມີຜົນບັງຄັບໃຊ້ກັບບຸກຄົນທຳມະດາ, ຫາກຜູ້ກະທຳຜິດເປັນອົງການ ຫຼື ນິຕິບຸກຄົນ ຈະຕ້ອງປະເຊີນກັບການລົງໂທດທີ່ສູງເປັນສອງເທົ່າເຊິ່ງອາດສູງເຖິງ 20 ລ້ານດົງ ໃນກໍລະນີທີ່ມີການລະເມີດກ່ຽວກັບການສະໜອງ ຫຼື ປ່ອຍປະລະເລີຍເລື່ອງສະຖານທີ່.

ກົດໝາຍຫວຽດນາມນິຍາມ "ຢາສູບໄຟຟ້າ" ວ່າເປັນອຸປະກອນທີ່ໃຊ້ຄວາມຮ້ອນເຮັດໃຫ້ຂອງແຫຼວ ບໍ່ວ່າຈະມີສ່ວນປະສົມຂອງນິໂຄຕິນ ຫຼືບໍ່ກໍຕາມກາຍເປັນລະອອງຝອຍສຳລັບການສູດດົມ, ສ່ວນ "ຜະລິດຕະພັນຢາສູບທີ່ໃຊ້ຄວາມຮ້ອນ" ແມ່ນອຸປະກອນທີ່ໃຊ້ຄວາມຮ້ອນກັບໃບຢາສູບເຊິ່ງຜ່ານຂະບວນການພິເສດໂດຍປາສະຈາກການເຜົາໄໝ້.

(1 ລ້ານດົງປະມານ 38 ໂດລາ)

# ອິນໂດເນເຊຍ ປະກາດໃຊ້ປະມວນກົດໝາຍອາຍາ ແລະ ປະມວນກົດໝາຍການດຳເນີນຄະດີອາຍາ




(Xinhua) - ວັນສຸກທີ 2 ມັງກອນຜ່ານມາ, ອິນໂດເນເຊຍ ປະກາດໃຊ້ປະມວນກົດໝາຍອາຍາ ແລະ ປະມວນກົດໝາຍການດຳເນີນຄະດີອາຍາ ເຊິ່ງເປັນບາດກ້າວສຳຄັນໃນການປະຕິຮູບລະບົບຍຸຕິທຳທາງອາຍາຂອງປະເທດ; ກົດໝາຍ 2 ສະບັບໃໝ່ນີ້ ຈະທົດແທນລະບຽບການທີ່ມີມາດົນນານ, ລວມທັງຂໍ້ກຳນົດທີ່ສືບທອດມາຈາກຍຸກອານານິຄົມ.

ຢຸສຣິລອິຊາມາເຮນດຣາ (Yusril Ihza Mahendra) ລັດຖະມົນຕີກະຊວງປະສານງານດ້ານກົດໝາຍ, ສິດທິມະນຸດ, ການເຂົ້າເມືອງ ແລະ ການລົງໂທດ ກ່າວວ່າ: ການເຄື່ອນໄຫວຄັ້ງນີ້ຖືເປັນການສິ້ນສຸດຂອງລະບົບກົດໝາຍອາຍາໃນຍຸກອານານິຄົມແລະເປັນການເລີ່ມຕົ້ນແນວທາງທີ່ທັນສະໄໝແລະມີມະນຸດສະທຳຫຼາຍຂຶ້ນ ໃນການບັງຄັບໃຊ້ກົດໝາຍ.

ປະມວນກົດໝາຍອາຍາສະບັບໃໝ່ໃຫ້ຄວາມສຳຄັນກັບຂະບວນການຍຸຕິທຳແບບຟື້ນຟູຫຼາຍຂຶ້ນ; ນອກຈາກການຕິດຄຸກແລ້ວ, ຍັງອະນຸຍາດໃຫ້ມີການລົງໂທດທາງເລືອກອື່ນເຊັ່ນ: ການບໍລິການຊຸມຊົນ, ການຟື້ນຟູແລະການໄກ່ເກ່ຍ.

ປະມວນກົດໝາຍການດຳເນີນຄະດີອາຍາສະບັບໃໝ່ສ້າງກົດລະບຽບສຳລັບການສືບສວນ ແລະ ການພິຈາລະນາຄະດີ, ປັບປຸງການກວດກາຂອງອົງການບັງຄັບໃຊ້ກົດໝາຍ, ແລະເພີ່ມທະວີການປົກປ້ອງຜູ້ເຄາະຮ້າຍແລະພະຍານ ໃຫ້ດີຍິ່ງຂຶ້ນ; ນອກຈາກນີ້, ຍັງສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນເພື່ອເພີ່ມປະສິດທິພາບໃນລະບົບຍຸຕິທຳອີກດ້ວຍ.

# ຝຣັ່ງ ເລື່ອນບັງຄັບໃຊ້ກົດໝາຍ ຫ້າມຈອກພາດສະຕິກໃຊ້ແລ້ວຖິ້ມ



(AFP) - ປະເທດຝຣັ່ງໄດ້ເລື່ອນການບັງຄັບໃຊ້ກົດໝາຍຫ້າມໃຊ້ຈອກພາດສະຕິກແບບໃຊ້ແລ້ວຖິ້ມ ອອກໄປສີ່ປີ ເປັນປີ 2030, ເນື່ອງຈາກຄວາມຫຍຸ້ງຍາກໃນການຊອກຫາທາງເລືອກອື່ນ. ກ່ອນໜ້ານີ້, ການຫ້າມໃຊ້ຈອກພາດສະຕິກແບບໃຊ້ແລ້ວຖິ້ມ ມີກຳນົດຈະເລີ່ມຕົ້ນໃນວັນທີ 1 ມັງກອນ 2026, ແຕ່ກະຊວງການຫັນປ່ຽນທາງນິເວດວິທະຍາ (Ministry for Ecological Transition) ລະບຸວ່າ ຜົນການທົບທວນຄືນຫຼ້າສຸດກ່ຽວກັບຄວາມເປັນໄປໄດ້ທາງເຕັກນິກໃນການກຳຈັດພາດສະຕິກອອກຈາກຈອກນັ້ນເປັນເຫດຜົນທີ່ສົມຄວນແກ່ການເລື່ອນກຳນົດເວລາອອກໄປ; ກະຊວງຍັງລະບຸວ່າ ຈະມີການທົບທວນຄືນຄວາມຄືບໜ້າໃນການຊອກຫາວັດສະດຸທາງເລືອກສຳລັບຈອກພາດສະຕິກແບບໃຊ້ແລ້ວຖິ້ມ ອີກຄັ້ງໃນປີ 2028 ແລະ ກ່າວຕື່ມວ່າ ການຫ້າມໃຊ້ຈະເລີ່ມໃນວັນທີ 1 ມັງກອນ 2030, ຂະນະທີ່ບໍລິສັດຕ່າງໆຈະມີເວລາ 12 ເດືອນ ເພື່ອກຳຈັດສິນຄ້າໃນຄັງຂອງຕົນ.

ປະເທດຝຣັ່ງຄ່ອຍໆບັງຄັບໃຊ້ກົດໝາຍຫ້າມຜະລິດຕະພັນພາດສະຕິກແບບໃຊ້ແລ້ວຖິ້ມໃນໄລຍະທົດສະວັດທີ່ຜ່ານມາ, ໂດຍກົດໝາຍປີ 2020 ກຳນົດເສັ້ນຕາຍໃນປີ 2040 ເພື່ອກຳຈັດພາດສະຕິກແບບໃຊ້ແລ້ວຖິ້ມທັງໝົດ ລວມທັງການຫ້າມໃຊ້ຖົງພາດສະຕິກສຳລັບສິນຄ້າທີ່ມີນ້ຳໜັກໜ້ອຍກວ່າ 1.5 ກິໂລ ສຳລັບໝາກໄມ້ 30 ຊະນິດ ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດໃນປີ 2022 ແລະ ໄດ້ປ່ຽນແປງພຶດຕິກຳການຊື້ສິນຄ້າຢູ່ຊຸບເປີມາເກັດຢ່າງຊັດເຈນ.

# ຕາມໂລກໃຫ້ທັນ ດ້ວຍຂ່າວສັ້ນໆ

❖ ວິເສດ ສະແຫວງສຶກສາ

**ທີ່ ສປຈີນ**

ແຫຼ່ງຂ່າວຕ່າງປະເທດໃຫ້ຮູ້ຫວ່າງບໍ່ເທິງມານີ້ ວ່າທາງການຈີນ ໄດ້ມີດຳລັດ 12 ຂໍ້ ກ່ຽວກັບວ່າຈ້າງພະນັກງານທີ່ເປັນຄົນຈີນເຂົ້າໄປເຮັດວຽກຢູ່ສະຖານທູດ ແລະ ສະຖານກົງສູນຂອງຕ່າງປະເທດ ໃນ ສປຈີນ, ດຳລັດສະບັບນີ້ ຈະມີຜົນສັກສິດນັບແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ. ເນື້ອໃນສຳຄັນຂອງດຳລັດກຳນົດວ່າ: ໃນການວ່າຈ້າງພະນັກງານທີ່ເປັນຄົນຈີນນັ້ນ, ສະຖານທູດ ຫຼື ກົງສູນຂອງຕ່າງປະເທດ ຕ້ອງລົງປະກາດກ່ຽວກັບຕຳແໜ່ງງານຜ່ານເວັບໄຊຂອງກະຊວງການຕ່າງປະເທດຈີນ; ນອກຈາກນັ້ນ, ຜູ້ວ່າຈ້າງຍັງຕ້ອງເຊັນຂໍ້ຕົກລົງການວ່າຈ້າງກັບໜ່ວຍງານທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບ ໂດຍຫ້ອງການການຕ່າງປະເທດຂັ້ນຕ່າງໆ. ດຳລັດຍັງໄດ້ກຳນົດຢ່າງຈະແຈ້ງພັນທະຂອງສະຖານທູດ ຫຼື ສະຖານກົງສູນ ໃນການປົກປ້ອງສິດທິທາງກົດໝາຍ ແລະ ຜົນປະໂຫຍດຂອງພະນັກງານທີ່ເປັນລູກຈ້າງ.

**ຈາກແຫຼ່ງຂ່າວ: ຊິນຮົວ (Xinhua).**

**ທີ່ຍີ່ປຸ່ນ**

ຂ່າວຕ່າງປະເທດໃນທ້າຍເດືອນພະຈິກປີນີ້ ໃຫ້ຮູ້ວ່າ: ທາງການຍີ່ປຸ່ນ ໄດ້ກຳນົດເງື່ອນໄຂລະອຽດຕື່ມ ກ່ຽວກັບບຸກຄົນຕ່າງປະເທດທີ່ຂໍສັນຊາດຍີ່ປຸ່ນ ຍ້ອນວ່າໃນປັດຈຸບັນ ຈຳນວນຄົນຕ່າງປະເທດໃນຍີ່ປຸ່ນໄດ້ເພີ່ມຂຶ້ນຢ່າງໄວວາ; ທ່ານນາຍົກຍິງຄົນທຳອິດຂອງຍີ່ປຸ່ນ ໄດ້ສັ່ງໃຫ້ກະຊວງຍຸຕິທຳ ປັບປຸງເງື່ອນໄຂອະນຸມັດສັນຊາດໃຫ້ຄົນຕ່າງປະເທດ ເພື່ອຮັບປະກັນຄວາມປອດໄພ, ຄວາມໝັ້ນຄົງ, ຄວາມເປັນລະບຽບຮຽບຮ້ອຍ ແລະ ການມີສ່ວນຮ່ວມຂອງຄົນຕ່າງປະເທດທີ່ອາໄສຢູ່ປະເທດຍີ່ປຸ່ນ. ບຸກຄົນຕ່າງປະເທດທີ່ຈະໄດ້ຮັບສັນຊາດຍີ່ປຸ່ນ ຕ້ອງເປັນຄົນປະພຶດຕົວທີ່ດີ, ມີປັດໄຈລ້ຽງຊີບຈາກຊັບສິນ, ວິຊາອາຊີບຂອງຕົນເອງ ຫຼື ຂອງຄູ່ສົມລົດ ກໍຄືພີ່ນ້ອງ, ຕ້ອງຜ່ານການຢູ່ຍີ່ປຸ່ນມາແລ້ວຢ່າງໜ້ອຍ 5 ປີ.

**ຈາກແຫຼ່ງຂ່າວ: The Straits Times/ ANN**

**ທີ່ສີລັງກາ**

ຂ່າວຈາກປະເທດສີລັງກາ ໃຫ້ຮູ້ຫວ່າງມໍ່ໆມານີ້ວ່າ ກອງກຳລັງຕຳຫຼວດຂອງປະເທດນີ້ ໄດ້ຈັບກຸມຜູ້ຕ້ອງສົງໄສກວ່າ 190,000 ຄົນ ທີ່ພົວພັນກັບຄະດີຄ້າຢາເສບຕິດ ນັບແຕ່ວັນທີ 1 ມັງກອນ-22 ຕຸລາ 2025 ພ້ອມດ້ວຍຂອງກາງຄື: ຢາບ້າ 2,542 ກິໂລ, ເຮໂຣອິນ 1,482 ກິໂລ ແລະ ກັນຊາ 14,443 ກິໂລ.

**ແຫຼ່ງຂ່າວ: ຊິນຮົວ ຈາກນະຄອນໂກລົມໂບ**

**ທີ່ອັງກິດ**

ຂ່າວຈາກປະເທດອັງກິດຫວ່າງມໍ່ໆມານີ້ໃຫ້ຮູ້ວ່າ: ທາງການຂອງປະເທດນີ້ ໄດ້ປັບປຸງນະໂຍບາຍອະນຸມັດການພັກອາໄສແບບຖາວອນໃນອັງກິດສຳລັບຄົນຕ່າງປະເທດ; ຄືໃນເມື່ອກ່ອນ ຜູ້ທີ່ຈະໄດ້ຮັບອະນຸມັດ ຕ້ອງໄດ້ຜ່ານການຢູ່ອາໄສໃນອັງກິດແບບຕໍ່ເນື່ອງມາເປັນເວລາ 5 ປີ, ແຕ່ດຽວນີ້ ໄດ້ເພີ່ມຂຶ້ນເປັນ 10 ປີ. ນີ້ແມ່ນເງື່ອນໄຂທົ່ວໄປ, ແຕ່ສຳລັບແຮງງານຕ່າງປະເທດແລ້ວ ຍັງໄດ້ເນັ້ນເງື່ອນໄຂຄວາມຊຳນານງານ ແລະ ຄວາມສາມາດດ້ານພາສາອັງກິດ ໃນລະດັບດີອີກດ້ວຍ.

**ແຫຼ່ງຂ່າວ: ຊິນຮົວ ຈາກລອນດອນ**




***#ບ່າວກະບື***

**ສາວ**ເລຂາດີ ກັບ ສາວເລຂາເກັ່ງ ຕ່າງກັບແນວໃດ? ສາວເລຂາດີ ມັກຈະເວົ້າກັບຫົວໜ້າວ່າ: "ສະບາຍດີຍາມເຊົ້າຫົວໜ້າ" ສ່ວນສາວເລຂາເກັ່ງນັ້ນເວົ້າວ່າ: "ມັນເຊົ້າແລ້ວໄດ໋ບໍ່ຫົວໜ້າ".

***#BAOKBU***

What is the difference between a good secretary and an excellent one?. A good secretary says "Dood morning sir", and an excellent secretary says, "It's morning sir."

ທະນາຄານພັດທະນາລາວ
LDB Bank

## ກອງປະຊຸມ...

(ຕໍ່ຈາກໜ້າ 7)

ດາ ມະນີຄຳ ກຳມະການປະຈຳພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ໄປຮັບໜ້າທີ່ໃໝ່ຢູ່ຄະນະກຳມະການປົກຄອງແຂວງ; 2) ຮັບຮອງເອົາການຍົກຍ້າຍ ທ່ານ ໝັ້ນຍືນ ຄົນສະໝອນ ກຳມະການປະຈຳພັກແຂວງ, ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ ໄປຮັບໜ້າທີ່ໃໝ່ຢູ່ຄະນະກຳມະການປົກຄອງແຂວງ; 3) ຮັບຮອງເອົາການຍົກຍ້າຍທ່ານ ແກ້ວບຸນຂ້ອນ ໄຊຍະວົງສາ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານເມືອງ, ເຈົ້າເມືອງຄູນຄຳ ໄປຮັບໜ້າທີ່ໃໝ່ ຢູ່ຄະນະກຳມະການປົກຄອງແຂວງ; 4) ຮັບຮອງເອົາການຍົກຍ້າຍ ທ່ານ ປອ. ສິນນະສອນ ແສງຈັນທະວົງ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ໄປຮັບໜ້າທີ່ໃໝ່ ຢູ່ເມືອງໄຊບົວທອງ; 5) ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ນາງ ມຸນທາ ລັດຖະຈັກ ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄປຮັບໜ້າທີ່ໃໝ່ ຢູ່ຄະນະກຳມະການປົກຄອງແຂວງ; ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ນອນຕາ ແກ້ວນະວົງ ກຳມະການພັກແຂວງ, ຫົວໜ້າພະແນກຍຸຕິທຳແຂວງ ໄປຮັບໜ້າທີ່ໃໝ່ເປັນຫົວໜ້າຄະນະໂຄສະນາອົບຮົມແຂວງ.

ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງຮອງປະທານຄະນະກຳມະການປົກຄອງແຂວງ ແລະ ກຳມະການ ຄະນະກຳມະການປົກຄອງແຂວງຄື: 1) ທ່ານ ເດດສັກດາ ມະນີຄຳ ກຳມະການປະຈຳພັກແຂວງ, ເປັນຮອງປະທານຄະນະກຳມະການປົກຄອງແຂວງຄຳມ່ວນ (ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ); 2) ທ່ານ ໝັ້ນຍືນ ຄົນສະໝອນ ກຳມະການປະຈຳພັກແຂວງ, ເປັນຮອງປະທານຄະນະກຳມະການປົກຄອງແຂວງຄຳມ່ວນ (ຊີ້ນຳວຽກງານຂົງເຂດເສດຖະກິດ); 3) ທ່ານ ພັອ ສີສົມພູ ແກ້ວບຸນລ້ອມ ກຳມະການປະຈຳພັກແຂວງ, ຫົວໜ້າການເມືອງກອງບັນຊາການທະຫານແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 4) ທ່ານ ພັອ. ຈັນໄຊ ນັນທະວົງ ກຳມະການພັກແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງເປັນກຳມະການຄະນະກຳມະການປົກຄອງແຂວງ; 5) ທ່ານນາງ ກຽນຕາ ວັນມະນາ ກຳມະການພັກແຂວງ, ຫົວໜ້າພະແນກການຕ່າງປະເທດແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 6) ທ່ານ ສົມບູນ ແກ້ວວົງສາ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 7) ທ່ານນາງ ສຸກຂະເສີມ ສິດທິເດດ ກຳມະການພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 8) ທ່ານ ແກ່ນຈັນ ທອງສະຫວັດ ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 9) ທ່ານ ຄຳສິງ ໄຊສິດທິເດດ ກຳມະການພັກແຂວງ, ຫົວໜ້າພະແນກການເງິນແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 10) ທ່ານ ແກ້ວບຸນຂວັນ ໄຊຍະວົງສາ ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳແລະສິ່ງແວດລ້ອມແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 11) ທ່ານ ສົມວິໄຊ ວົງທິລາດ ກຳມະການພັກແຂວງ, ຫົວໜ້າພະແນກອຸດສະຫະກຳ ແລະ ການຄ້າແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 12) ທ່ານ ສຸທັດ ສຸມາລີ ກຳມະການພັກແຂວງ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 13) ທ່ານ ນາງ ມຸນທາ ລັດຖະຈັກ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ; 14) ທ່ານ ຫວາດ ອິນຄຳວົງ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ ແລະ 15) ທ່ານ ລຳພອນ ສີອັກສອນ ວ່າການຫົວໜ້າພະແນກຍຸຕິທຳແຂວງ ເປັນກຳມະການ ຄະນະກຳມະການປົກຄອງແຂວງ.

ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ໃຫ້ດຳລົງຕຳແໜ່ງ ນຳພາ-ຄຸ້ມຄອງຂອງແຂວງ ໃນຄັ້ງນີ້, ລ້ວນແຕ່ຖືກຕ້ອງຕາມຂັ້ນຕອນຂອງລັດຖະທຳມະນູນ ແລະ ກົດໝາຍ, ຮັບປະກັນມາດຖານເງື່ອນໄຂ ແລະ ສອດຄ່ອງກັບຄວາມມຸ້ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າຊາວແຂວງຄຳມ່ວນ.

ນອກນີ້, ຍັງພິຈາລະນາ, ຮັບຮອງເອົາການສະເໜີການສ້າງຕັ້ງຕາແສງ 44 ຕາແສງ ພາຍໃນແຂວງຄຳມ່ວນຄື: 1). ເມືອງທ່າແຂກ 91 ບ້ານ 5 ຕາແສງ ຄື: ຕາແສງ ສີໂຄດ, ຕາແສງ ນາມ່ວງ, ຕາແສງ ນາເສ, ຕາແສງ ນາໂດນ ແລະ ຕາແສງດົງໃຕ້; 2). ເມືອງໜອງບົກ 55 ບ້ານ 4 ຕາແສງ ຄື: ຕາແສງ ໜອງຜຳ, ຕາແສງ ໜອງບົກ, ຕາແສງ ດອນສະຫວ່າງ ແລະ ຕາແສງ ຕານເທິງ; 3). ເມືອງເຊບັ້ງໄຟ 45 ບ້ານ 4 ຕາແສງ ຄື: ຕາແສງ ສີບຸນເຮືອງ, ຕາແສງ ແສນຄຳ ສົມບູນ, ຕາແສງຄຳແພໃຕ້ແລະ ຕາແສງຄຳແພເໜືອ; 4). ເມືອງຫີນບູນ 100 ບ້ານ, 6 ຕາແສງ ຄື: ຕາແສງ ໂພນຕິ້ວ, ຕາແສງ ຄຳແກ້ວ, ຕາແສງ ຫີນບູນ, ຕາແສງ ຫາດໃຫຍ່, ຕາແສງ ປຸ່ງເໜືອ ແລະ ຕາແສງ ເລົ່າຄາ; 5). ເມືອງມະຫາໄຊ 68 ບ້ານ 4 ຕາແສງ ຄື: ຕາແສງ ມະຫາໄຊ, ຕາແສງ ໂພນສະອາດ, ຕາແສງ ປ່າໜາມ ແລະ ຕາແສງ ໂພນເມືອງ; 6). ເມືອງຍົມມະລາດ 46 ບ້ານ, ມີ 04 ຕາແສງ ຄື: ຕາແສງ ນາບໍ່, ຕາແສງ ຍົມມະລາດ, ຕາແສງ ນາໂຊກ ແລະ ຕາແສງ ພົດ; 7). ເມືອງບົວລະພາ 73 ບ້ານ, ມີ 05 ຕາແສງ ຄື: ຕາແສງ ຕະຫລອງ, ຕາແສງ ທົ່ງຂາມ, ຕາແສງ ຊອກ, ຕາແສງ ນາສະລອນ ແລະ ຕາແສງ ໜອງມ້າ; 8) ເມືອງນາກາຍ 35 ບ້ານ, ມີ 05 ຕາແສງ ຄື: ຕາແສງ ນາກາຍ, ຕາແສງ ເມືອງຫຼວງ-ນາຕານ, ຕາແສງ ນາວາງ, ຕາແສງ ທ່າໃຜ່ບ້ານ ແລະ ຕາແສງ ເຕີງ; 9). ເມືອງໄຊບົວທອງ 44 ບ້ານ, ມີ 04 ຕາແສງ ຄື: ຕາແສງ ສີວິໄລ, ຕາແສງ ນາຊາຍຄຳ, ຕາແສງ ນາຜ້າວ ແລະ ຕາແສງ ນ້ຳກະປໍ ແລະ 10). ເມືອງຄູນຄຳ 22 ບ້ານ, ມີ 03 ຕາແສງ ຄື: ຕາແສງ ນາກາງ, ຕາແສງ ຄູນແກ້ວ ແລະ ຕາແສງ ທ່ານາ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ